# บทที่ 9

## บทฝึกหัดอ่าน

### ປະເທດລາວ

| | |
|---|---|
| ປະເທດຂ້ອຍ  ເອີ້ນຊື່ເມືອງລາວ | ประเทศข้อยเอิ้นชื่อเมืองลาว |
| ດິນ ດອນຍາວຕາມລຳ ແມ່ນ້ຳ | ดินดอนยาวตามลำแม่น้ำ |
| ທົ່ວ ທຸກກ້ຳປ່າໃຫຍ່ດົງໜາ | ทั่วทุกก้ำป่าใหญ่ดงหนา |
| ມີປູປາເງິນຄຳ ບໍ່ແຮ່ | มีปูปาเงินคำบ่อแฮ่ |
| ເຊື້ອພໍ່ແມ່ດຸໝັ່ນອາດຫານ | เชื้อพ่อแม่ดุหมั่นอาจหาญ |
| ລູກ ແລະຫຼານຈະຂໍສືບຕໍ່ | ลูกและหลานจะขอสืบต่อ |
| ໃຈຈົດຈໍ່ຮຽນເອົາວິຊາ | ใจจดจ่อ เฮียนเอาวิชา |
| ຮູ້ ເພື່ອມາສ້າງສາປະເທດ | ฮู้เพื่อมา สร้างสาประเทศ |

### ຫັດອ່ານ

| | |
|---|---|
| ຂອງກິນແຊບ | ປານໃດກໍ່ດີ |
| ຖ້າຫາກມີ | ແມງວັນຕອມເຕົ້າ |
| ແມ່ນ ທືອເຂົ້າ | ຂ້ອຍກໍ່ ບໍ່ກິນ |
| ເພາະມັນເປັນ | ພະຍາດເຈັບທ້ອງ |
| ຢ້ານໄດ້ຮ້ອງ | ນອນ ເທນບນອນທາງາຍ |

### ຂາຍຜົນລະປູກໃຫ້ລັດ

ມື້ໜຶ່ງຢູ່ຕໍ່ໜ້າຮ້ານຄ້າລັດປະຈຳຕາແສງປ່າໄຮ່  ແຂວງສາລະວັນ  ເຕັມແຕ່ປະຊາຊົນຮັ່ງຮໍ. ບາງພ້ອງກໍ່ມາຕິດຕໍ່ຂາຍຜົນລະປູກ  ບາງພ້ອງກໍ່ນຳສັດລ້ຽງ ມາຂາຍແລະບາງພ້ອງກໍ່ກຳລັງສີນລະອົບຊື້ງ ເຂົ້າຂາຍໃຫ້ລັດ.  ຢູ່ແຈຮ້ານຄ້າກໍ່ໄດ້ຄືຈັ່ງວ່າປະຊາຊົນທັງໝົດທໍ່ເອີນທໍ ບໍ່ແມ່ນຫຍັງດອກ ພວກເຂົາ

ເຈົ້າເອົາເຄື່ອງປ່າຂອງດົງມາແລກປ່ຽນເຄື່ອງໃຊ້ນຳລັດ ພວກແມ່ຍິງ ແຍງແຜ່ນແພສີບົ້ນ ຍິ້ມດ້ວຍຄວາມພໍໃຈ ລຸງກະຕື ຫອບທ້ອຍແລະຊາມໃຈນບັກໃຫຍ່ອອກປະຕູໄປດ້ວຍຄວາມເບີກບານໃຈ

ນັບຕັ້ງແຕ່ໄດ້ຕັ້ງຮ້ານຄ້າລັດຂຶ້ນນີ້ ປະຊາຊົນທົ່ວຕາແສງປ່າໄວ່ ຄືຈັ່ງວ່າ ມີຊີວິດຊີວາຊຶ້ນກວ່າແຕ່ກ່ອນຫຼາຍ ຜູ້ໃດກໍ່ຍິ້ມແຍ້ມແຈ່ມໃສ ທັງຂະຫຍັນທ້າວທັນເຮັດວຽກຢ່າງບໍ່ຮູ້ເມື່ອຍ ບໍ່ວ່າຍາມແລ້ງຫຼືຍາມຝົນ, ພວກເຂົາເຈົ້າກໍ່ດີອົກດີໃຈ ຢາກປູກຢາກຝັງອີຫລີ ເພາະຮ້ານຄ້າປະຈຳຕາແສງໄຂປະຕູຮັບຊື້ຕະຫຼອດເວລາ ດຽວນີ້ພວກເຂົາເຈົ້າບໍ່ຕ້ອງຄຶດງຶ້ຊິຫາບຊິເປົ້າໄປຂາຍທາງອື່ນອີກແລ້ວ ທັງລາຄາ ກໍ່ຖືກອົກຖືກໃຈນຳອີກ ເປັນຕາອອນຊອນນຳພວກເພິ່ນ

ໃນປີທີ່ຜ່ານມາ ປະຊາຊົນຕາແສງປ່າໄວ່ຂາຍເຂົ້າໃຫ້ລັດ ເກືອບຮອດສອງຮ້ອຍໂຕນ ງົວຄວາຍແລະໝູຫ້າສິບກວ່າໂຕ ພ້ອມທັງຜົນລະປູກອື່ນໆອີກຫຼາຍຮ້ອຍກິໂລ ປະຈຸບັນນີ້ພວກເຂົາເຈົ້າພາກັນແຫ່ນຳຜົນຜະລິດຂອງຕົນມາ ຂາຍ ໃຫ້ລັດນັບມື້ນັບຫຼາຍຂຶ້ນຊັກໃຊ້ ທຸກຄົນກໍ່ຕັ້ງໃຈເຮັດວຽກດ້ວຍຄວາມດຸໝັ່ນ

## ແປສັບ

| คำศัพท์ | ความหมาย |
|---|---|
| ເຄື່ອງປ່າຂອງດົງ | ເຄື່ອງທີ່ເກີດຂຶ້ນຕາມປ່າ |
| | ຂີ້ຊີ ນ້ຳມັນຍາງໃຊ້ຢາເຮືອ |
| ມີຊີວິດຊີວາ | ມີຄວາມບ່ອນຊື່ນ, ເຕັ້ນຂຶ້ນ |
| ຄຶດງຶ້ | ຄຶດຍາກ |
| ຜົນ ຜະລິດ | ສິ່ງຂອງທີ່ເຮັດຂຶ້ນ |

## ຄຳຖາມ

1. ເປັນຫຍັງປະຊາຊົນຕາແສງປ່າໄວ່ຈຶ່ງມາອັ່ງອໍກັນຢູ່ໜ້າຮ້ານຄ້າລັດ
2. ປີກາຍນີ້ ພວກເຂົາເຈົ້າໄດ້ຂາຍຫຍັງໃຫ້ລັດແດ່
3. ລຸງກະຕື ລາວເຮັດຫຍັງ

## ຮ້ານຄ້າຂອງລັດ

ຮ້ານຄ້າໃຫຍ່ຂອງລັດຫຼັງທຳອິດ ໄດ້ຈັດໃຫ້ມີຂຶ້ນຢູ່ທີ່ຕຶກສີ່ຊັ້ນ ແຄມທະໜົນສີ່ແຍກສີຫອມ ນະຄອນ ຫຼວງວຽງຈັນ ເຄື່ອງຂອງຢູ່ໃນຮ້ານຄ້າແຫ່ງນີ້ ແມ່ນຊື້ມາຈາກຮ້ານຄ້າລວມໝູ່ປະຈຳ ຕາມສາງຂອງ ໃຜລາວເຊິ່ງແມ່ນ ອຳນາດການປົກຄອງທ້ອງຖິ່ນໄດ້ຈັດຕັ້ງຂຶ້ນເອງ ແລ້ວຂາຍໃນລາຄາຂອງລັດ ເໝືອນກັນ ໃນຮ້ານຄ້າຂອງລັດແຫ່ງນີ້ ເພິ່ນໄດ້ນຳເອົາສິນຄ້າຫຼາຍຊະນິດມາຂາຍໃນລາຄາຖືກ ເພື່ອ ແກ້ໄຂຊີວິດການເປັນຢູ່ຂອງພະນັກງານ ເປັນຕົ້ນກໍ່ແມ່ນເຄື່ອງກິນ ເຄື່ອງດື່ມ ເຄື່ອງໃຊ້ ແລະເຄື່ອງ ນຸ່ງຫົ່ມ ສິນຄ້າແຕ່ລະຢ່າງມີລາຄາຄົງຢູ່ ເຊິ່ງເປັນລາຄາທີ່ຕາຍຕົວບໍ່ຂຶ້ນບໍ່ລົງ ຜູ້ຂາຍກໍ່ໃຫ້ຄວາມສະ ດວກ ແກ່ຜູ້ຊື້ເປັນຢ່າງດີ ມັນບໍ່ຄືຮ້ານຄ້າເອກະຊົນທີ່ແລ່ນນຳ ເງິນ ຕາ ຕ່າງປະເທດ ໂດຍບໍ່ ຄຳນຶງ ເຖິງຊີວິດອັນແສນ ລຳບາກຂອງປະຊາຊົນ ລະບຽບການຊື້ຂາຍກໍ່ບໍ່ ລຳບາກໃຈທີ່ໃດ ພຽງແຕ່ເຮົາ ເອົາ ບັດຫຼື ປຶ້ມ ຊື້ເຄື່ອງລັດ ທີ່ທາງກະຊວງ ຫຼືກົມກອງຂອງຕົນສັງກັດຢູ່ ໄປສະເໜີແລ້ວ ກໍ່ຈະຊື້ໄດ້ຢ່າງ ສະບາຍ ນີ້ກໍ່ສະແດງໃຫ້ເຫັນວ່າເວລາໃດ ຍາມໃດ ພັກ ແລະລັດຖະບານ ເຮົາກໍ່ບໍ່ໄດ້ລົດລະ ໃນການ ພະຍາຍາມ ຊອກສະແຫວງຫາທຸກວິທີທາງ ເພື່ອແກ້ໄຂຊີວິດການເປັນຢູ່ ຂອງພະນັກງານ ແລະ ຂອງປະຊາຊົນເຮົາ ໃຫ້ນັບມື້ ນັບ ດີຂຶ້ນ ໄປເລື້ອຍໆ

### ແປສັບ

| คำศัพท์ | ความหมาย |
|---|---|
| ເອກະຊົນ | ສ່ວນຕົວ , ສ່ວນບຸກຄົນ |
| ບໍ່ຄຳນຶງ | ບໍ່ຄິດຮອດຄິດເຖິງ |
| ລຳບາກໃຈ | ຫຍຸ້ງຍາກໃຈ |

### ຄຳຖາມ

1. ເພິ່ນຈັດ ຕັ້ງຮ້ານຄ້າຂອງລັດຂຶ້ນເພື່ອຫຍັງ
2. ໃຊ້ເຄື່ອງພາຍໃນຮ້ານຄ້າຂອງລັດ ແລະ ເອກະຊົນ ແຕກຕ່າງກັນແນວໃດ
3. ຮ້ານຄ້າໃຫຍ່ຂອງລັດຫຼັງທຳອິດໄດ້ຈັດໃຫ້ມີ ຂຶ້ນຢູ່ບ່ອນໃດ

## ຄວາຍບັກຕູ້

ບັກຕູ້ແມ່ນ ຊື່ຄວາຍຂອງຂ້ອຍ ພໍ່ຂ້ອຍເວົ້າສູ່ຟັງວ່າ ເພິ່ນໄດ້ຊື້ມັນມາເຮັດນາຕັ້ງແຕ່ຂ້ອຍຍັງນ້ອຍໆກິນນົມແມ່ຢູ່ພຸ້ນ ຄວາຍໂຕນີ້ເປັນຄວາຍເຖິກ ຕົວໃຫຍ່ແຂງແຮງດີ ເຂົາຂອງມັນສັ້ນກຶດຕິດທັງສອງກ້ຳ ດ້ວຍເຫດນີ້ຈຶ່ງໃສ່ຊື່ໃຫ້ມັນວ່າບັກຕູ້ ມັນຊື່ ແລະຂຶ້ນຂີ່ໄດ້ຢ່າງສະບາຍ ຍ້ອນແຮງງານຂອງບັກຕູ້ ນີ້ແຫຼະ ຄອບຄົວຂ້ອຍຈຶ່ງມີເຂົ້າໃສ່ເລົ້າທຸກໆປີ ມັນແກ່ຄາດແກ່ໄຖໂດຍບໍ່ຂັດຂືນ ຈະໃຊ້ມັນເຮັດວຽກຍາກໃດກໍ່ໄດ້ ພໍ່ຂ້ອຍມັກເອົາມັນໄປໄຖຫຼືຄາດນາຕັ້ງແຕ່ເຊົ້າ ທຸກໆມື້ ບັກຕູ້ກໍ່ຕັ້ງໜ້າແກ່ຄາດຜາດໆໄປໂລດ ໂດຍບໍ່ກົດຫຍ້າ ຕາມຄອງຄາດຄອງໄຖ ມັນໄປກົກຮ່ອງກົກຮອຍບໍ່ມີເລົ່າມີຮານ ມັນຊຳນານ ແລະ ລຶ້ງເຄີຍກັບວຽກອັນນີ້ມາແລ້ວ ຄ້າຍກັບວ່າມັນເປັນຊາວນາສະຫຼາດຜູ້ໜຶ່ງ ເວລາປົດຄາດປົດໄຖ ປ່ອຍໃຫ້ມັນກິນຫຍ້າຢູ່ໃກ້ໆກ້າຫຼືເຂົ້າມັນກໍ່ບໍ່ກົດກິນ ຄວາຍບັກຕູ້ເປັນເພື່ອນຮູ້ສຶກຂອງຄອບຄົວຂ້ອຍ ທຸກໆມື້ເມື່ອເລີກຈາກໂຮງຮຽນຕອນແລງ ຂ້ອຍຟ້າວອອກໄປຫາຄວາຍບັກຕູ້ໂລດ ເມື່ອພໍ່ຂ້ອຍປົດມັນອອກຈາກໄຖ ຫຼືຄາດ ຂ້ອຍກໍ່ຂຶ້ນຂີ່ຫຼັງຂອງມັນ ແລ້ວຄ່ອຍໆພັດມັນໄປແນບນ້ຳຢູ່ຫ້ວຍແຄມນາແລ້ວກໍ່ເອົາມາລ້ຽງກິນຫຍ້າຈົນສ່ວງເບັ່ງຈຶ່ງເອົາມັນ ເຂົ້າແລ່ງ ເພື່ອໃຫ້ມັນໄດ້ພັກນອນຕໍ່ໄປ

### ແປສັບ

| คำศัพท์ | ความหมาย |
|---|---|
| ຕູ້ | สั้น ทู่ ไม่แหลม |
| ຜາດໆ | ຍ່າງໄວໆ |
| ບໍ່ມີເລົ່າມີຮານ | ໄປຕາມຄອງເກົ່າ |
| ເຂົ້າແລ່ງ | ບ່ອນຢູ່ບ່ອນນອນຂອງງົວຄວາຍ |

### ຄຳຖາມ

1. ເປັນຫຍັງເຈົ້າຈຶ່ງຮັກຄວາຍບັກຕູ້ຂອງເຈົ້າ
2. ເຈົ້າຄວນຮັກສາພໍລະບັດມັນຢ່າງໃດ
3. ເປັນຫຍັງຈຶ່ງໃສ່ຊື່ໃຫ້ມັນວ່າບັກຕູ້

## ຮັກສາແຂ້ວໃຫ້ສະອາດ

ເມື່ອຫຼຽວເຫັນນາງຄຳພູນຫົວຂື້ນເມື່ອໃດ ໝູ່ຄູ່ກໍ່ຍ້ອງວ່າແຂ້ວຂອງລາວຂາວງາມ ລຽນທີ່ ປານເມັດສາລີ ບໍ່ວ່າແຂ້ວປີ້ງ ຫຼື ແຂ້ວໂຄບ ເຫຼັ້ມໃດ ກໍ່ປອດລ້ອຍຊ້ອຍ ຄຳພູນກໍ່ຟ້າວລ້າງປາກ ຜັດແຂ້ວໂລດ ຍາມກາງຄືນເມື່ອອ່ານ ໜັງສືແລ້ວ ລາວຜັດແຂ້ວເສຍກ່ອນແລ້ວຈິ່ງເຂົ້ານອນ ຢູ່ ໂຮງຮຽນ ນາງຄຳສອນ ໝູ່ຂອງລາວຍື່ນ ແກ່ນໝາກຂາມຂົ້ວ ໃຫ້ຄຳພູນ ໆ ກໍ່ບໍ່ຮັບແກວ່ງຫົວພ້ອມ ມີເທື່ອນຶ່ງລາວຫຼົງອົມນ້ຳກ້ອນ ພໍແຕ່ອົມເຂົ້າໄປ ກໍ່ຮູ້ສຶກເມີນປາກ ແລະເຢັນແຂ້ວຈ້າວໆ ລາວຮີບ ຟ້າວຄາຍຖິ້ມທັນທີ ຄຳພູນລະມັດລະວັງ ແຂ້ວທີ່ສຸດ ຂອງຮ້ອນໃດຮ້ອນຫຼາຍ ສົ້ມຫຼາຍຈົນເຂັດ ແຂ້ວ ລາວກໍ່ບໍ່ກິນ ວຸ່ນນີ້ ລາວບໍ່ຈົ່ມເຈັບແຂ້ວຈັກເທື່ອ ເດັກນ້ອຍສ່ຳຄຽງກັນກັບຄຳພູນເຄີຍຮ້ອງ ໄຫ້ຍ້ອນເຈັບແຂ້ວແມງເລື້ອຍໆ ແຂ້ວເປັນແມງຈົ່ງແນ່ນແສນ ທໍລະມານ ກົກແຂ້ວກໍ່ໄຂ່ ແກ້ມ ເປັ່ງຜິດປົກກະຕິ ຕອດມູບໆ ໝຸດໝັດໃຈ ກິນເຂົ້າບໍ່ໄດ້ທັງນອນກໍ່ບໍ່ຫຼັບຕະຫຼອດຄືນ ປະກົດວ່າ ຄືຈົ່ງເຈັບປວດກວ່າເປັນບາດແຜ ທາງນອກຕັ້ງຫຼາຍເທົ່າ ດັ່ງນັ້ນ ເພື່ອເວັ້ນຈາກການເຈັບແຂ້ວ ອັນແສນທໍລະມານນີ້ ພວກເຮົາຄວນ ເອົາໃຈໃສ່ບົວລະບັດ ແຂ້ວໃຫ້ສະອາດເໝືອນນາງຄຳ ພູນເພາະນາງເປັນໂຕຢ່າງທີ່ ດີໃນການຮັກສາ ແຂ້ວ

### ແປສັບ

| คำศัพท์ | ความหมาย |
|---|---|
| ປອດລ້ອຍຊ້ອຍ | ບໍ່ມີ ຮອຍ ບໍ່ມີ ແມງກິນ |
| ທໍລະມານ | ເຮັດໃຫ້ລຳບາກ |
| ໝຸດໝັດໃຈ | ຢູ່ຍາກ ໃຈບໍ່ດີ |

### ຄຳຖາມ

1. ຍ້ອນຫຍັງແຂ້ວຂອງນາງຄຳ ພູນບໍ່ ເປັນແມງ
2. ເພື່ອບໍ່ຢາກໃຫ້ແຂ້ວເປັນແມງຕ້ອງເຮັດແນວໃດ
3. ນາງຄຳ ສອນເປັນໃຜ ລາວຍື່ນຫຍັງໃຫ້ຄຳພູນ

# ກັນພະຍາດໃນຍາມຝົນ

ປະຈຸບັນ ປະເທດເຮົາກໍ່ຄືບັນດາປະເທດໃນແຖບຮ້ອນພວມກ້າວເຂົ້າສູ່ລະດູຝົນແລ້ວ ໃນລະດູນີ້ກໍ່ມັກມີໂລກໄພໄຂ້ເຈັບ ເຂົ້າມາບຽດບຽນ ສຸຂະພາບ ແລະຊີວິດຂອງຄົນເຮົາເລື້ອຍໆໂລກໄພໄຂ້ເຈັບທີ່ມາພ້ອມກັນກັບລະດູຝົນນີ້ ແມ່ນໄດ້ແກ່ໄຂ້ຫວັດໃຫຍ່ ປອດບວມ ແລະພະຍາດອື່ນໆ ທັງນີ້ ແມ່ນເກີດຂຶ້ນຍ້ອນຄວາມບໍ່ລະມັດລະວັງ ເຊິ່ງປ່ອຍໃຫ້ຮ່າງກາຍໄດ້ຮັບຄວາມກະທົບກະເທືອນ ຈາກການປ່ຽນແປງອາກາດ ເຊັ່ນ ເຢັນໂພດ ໜາວໂພດ ຫຼືຮ້ອນໂພດ ເປັນຕົ້ນ ນອກຈາກນີ້ ເດັກນ້ອຍຍັງເປັນພະຍາດໄຂ້ເລືອດອອກ ເຊິ່ງເກີດຈາກຍຸງລາຍກັດ ຍຸງປະເພດນີ້ມັກຈະອອກໄຂ່ໃນຍາມຝົນ ຕາມບ່ອນນ້ຳຄ້າງ ນ້ຳຂັງ ຕາມຂຸມເອ່ງ ຕາມທ້ອຍຮ່ອງ ແລະບ່ອນອື່ນໆສະນັ້ນ ວິທີປ້ອງກັນຄື ເວລາເຮົາແລ່ງຝົນ ຫຼືອອກແຮງງານ ເມື່ອຄົນໂຕເຮົາປຽກຊຸ່ມ ກໍ່ຕ້ອງຮີບເຊັດໂຕໃຫ້ແຫ້ງ ພະຍາຍາມເຮັດໃຫ້ຮ່າງກາຍອົບອຸ່ນດ້ວຍເສື້ອຜ້າ ສ່ວນນ້ຳທີ່ໃຊ້ຢູ່ໃນເຮືອນກໍ່ຕ້ອງມີ ແນວອັດໄວ້ລັກແນ່ ແລະບໍ່ຄວນປ່ອຍໃຫ້ມີນ້ຳຄ້າງນ້ຳຂັງ ຕາມບໍ່ ລິເວນບ້ານເຮືອນ ເພື່ອບໍ່ໃຫ້ຍຸງມີໂອກາດອອກໄຂ່ ແລະແພ່ເຊື້ອໄດ້ ດັ່ງຄະຕິທີ່ວ່າ "ກັນດີກວ່າແກ້"

## ແປສັບ

| คำศัพท์ | ความหมาย |
|---|---|
| ປະຈຸບັນ | ດຽວນີ້ ເວລານີ້ |
| ຄະຕິ | ຄຳ ເຕືອນໃຈ |
| ແລ່ງຝົນ | ຕາກຝົນ ຖືກຝົນ |

## ຄຳ ຖາມ

1. ພະຍາດຊະນິດໃດມັກເກີດຂຶ້ນໃນຍາມຝົນ
2. ເຮົາຄວນມີວິທີປ້ອງກັນຢ່າງໃດ ເພື່ອຫຼີກເວັ້ນຈາກພະຍາດດັ່ງກ່າວ
3. ຍຸງລາຍໝັກອອກໄຂ່ຍາມໃດ ແລະອອກໄຂ່ຢູ່ບ່ອນໃດ

# ຮັກຊາດແມ່ນແນວໃດ

ປະເທດຊາດບ້ານເມືອງ ເປັນທີ່ຮັກແລະຫວງແຫນຂອງທຸກໆຄົນ ແຕ່ຕອນຍັງນ້ອຍ ຂ້ອຍບໍ່ຮູ້ຈັກຫຍັງ ໄດ້ຍິນແຕ່ ຜູ້ອື່ນເວົ້າກັນຢ່າງມິດພີ່ມັນວ່າ "ຮັກບ້ານເກີດເມືອງນອນຂອງຕົນ" ຂ້ອຍກໍ່ເວົ້າໄດ້ຄືກັນກັບຜູ້ອື່ນ ແຕ່ບໍ່ເຂົ້າໃຈຄວາມໝາຍຫຍັງເລີຍ ດຽວນີ້ຂ້ອຍເປັນນັກຮຽນຜູ້ໜຶ່ງທີ່ໄດ້ຜ່ານການສຶກສາອົບຮົມຕາມຫຼັກສູດການສຶກສາໃໝ່ ໄດ້ຄົ້ນຄວ້າຮໍ່າຮຽນແນວທາງນະໂຍບາຍການເມືອງແລະເຫັນປະກົດການໃນສັງຄົມແລ້ວ ຈຶ່ງຮູ້ແລະເຂົ້າໃຈ ດີວ່າຄົນທີ່ຮັກຊາດ ຮັກບ້ານເກີດເມືອງນອນນັ້ນ ແມ່ນຜູ້ຂະຫຍັນທ້ອນທັນໃນດ້ານການອອກແຮງງານ ມີທີ່ລະບຽບວິໄນຂອງການຈັດຕັ້ງ ຍົກສະຕິລະວັງຕົວສູງ ຕໍ່ການປ້ອງກັນຊາດ ຍອມເສຍສະລະທຸກສິ່ງທຸກຢ່າງເພື່ອສ່ວນລວມ ເມື່ອສັດຕູມາຂົ່ມຂູ່ຮຸກຮານ ກໍ່ຕ້ອງທຳການຕໍ່ສູ້ຢ່າງພິລະອາດຫານ ເຖິງວ່າຕົນຈະຕາຍກໍ່ບໍ່ເສຍດາຍຊີວິດ ຄົນທີ່ເວົ້າແຕ່ປາກວ່າຮັກບ້ານຮັກເມືອງ ແຕ່ບໍ່ຊ່ວຍບ້ານເມືອງໃນຍາມຍຸ້ງຍາກ ນາໆປະການນັ້ນ ເປັນຄົນຂີ້ຕົວະຫຼອກລວງ ເປັນຄົນເຫັນປະໂຫຍດສ່ວນຕົວ ຄິດຂີ່ຂົ່ມເຫງຜູ້ອື່ນ ຄົນແນວນີ້ ນັບວ່າເປັນຄົນໂງ່ແລະຊົ່ວຊ້າໃນສັງຄົມທີ່ສຸດ ສ່ວນຂ້ອຍເອງ ເມື່ອໃຫຍ່ຂຶ້ນ ຂ້ອຍຈະໃຊ້ທຸກຄວາມຮູ້ ຄວາມສາມາດ ເຂົ້າປະກອບສ່ວນໃນທຸກວຽກງານຂອງຊາດ ເພື່ອເຮັດໃຫ້ບ້ານເມືອງມີຄວາມສຸກຄວາມຈະເລີນຕໍ່ໄປເບື້ອງໜ້າ

## ແປສັບ

| คำศัพท์ | ความหมาย |
|---|---|
| ຫວງແຫນ | ຮັກສາໄວ້ |
| ມິດພີ່ມັນ | ເວົ້າກັນ ເລົ່າລື |
| ຄວາມໝາຍ | ເນື້ອຄວາມ ເນື້ອໃນ |
| ປະກອບສ່ວນ | ເຂົ້າຮ່ວມເຮັດ |
| ການຈັດຕັ້ງ | ການຈັດວາງລະບຽບ |

## ຄຳຖາມ

1. ຄົນຮັກຊາດເປັນຄົນແນວໃດ
2. ຄົນທີ່ເວົ້າແຕ່ປາກຊື່ໆເປັນຄົນແນວໃດ
3. ເມື່ອສັດ ຕູມາຂົ່ມຂູ່ຮຸກຮານ ເຮົາ ຕ້ອງເຮັດແນວໃດ

# ຊ່ອຍວຽກພໍ່ແມ່ຍາມພັກຮຽນ

ເມື່ອເຖິງກາງເດືອນມິຖຸນາ ໂຮງຮຽນຂ້ອຍກໍ່ພັກ ຍາມນີ້ຊໍ້າພັດ ແມ່ນລະດູຝົນ ຄອບຄົວຂ້ອຍເລີ່ມລົງມືເຮັດນາ ທຸກໆມື້ແຕ່ຕາເວັນຍັງບໍ່ທັນຂຶ້ນ ພໍ່ແລະອ້າຍກໍ່ແບກໄຖຈູງຄວາຍອອກສູ່ທົ່ງນາ ແມ່ແລະເອື້ອຍເມື່ອຫນຶ້ງເຂົ້າສຸກກໍ່ຈັດ ແຈງອາຫານ ແລ້ວຕິດຕາມພໍ່ ແລະ ອ້າຍອອກໄປນາເຫມືອນກັນ ພວກເພິ່ນບໍ່ຄ່ອຍໄດ້ຢູ່ເຮືອນ ມີແຕ່ສຸມໃສ່ວຽກນາ ເຫມີດມື້

ຍາມເຊົ້າ ນ້ອງວ່າ ໄດ້ຍິນສຽງເອື້ອຍລຸກຫນຶ້ງເຂົ້າ ຂ້ອຍ ກໍ່ຟ້າວລຸກຈາກບ່ອນນອນໂລດ ຂ້ອຍຮູ້ດີວ່າພໍ່ແມ່ອ້າຍເອື້ອຍຄືຊິຟ້າວອອກໄປເຮັດຫນ້າວຽກ ຈັ່ງຊັ້ນວຽກເຮືອນບາງຢ່າງທີ່ຂ້ອຍພໍເຮັດຕາງເພິ່ນ ຄັນພັດແຂ້ວລ້າງຫນ້າແລ້ວ ຂ້ອຍກໍ່ຟ້າວໄປປ່ອຍເປັດປ່ອຍໄກ່ ທັງຫວ່ານເຂົ້າເປືອກໃຫ້ມັນກິນ ເດີ່ນບ້ານ ແລະ ເຮືອນຊານທີ່ຮົກເຮື້ອ ຂ້ອຍກໍ່ປັດກວາດໃຫ້ກ້ຽງງາມ ຢູ່ເຮືອນຄືຂ້ອຍບໍ່ຂາດນ້ຳຈັກເທື່ອ ເມື່ອເຫັນວ່າບໍ່ມີ ຂ້ອຍກໍ່ໄປ ເອົານ້ຳກ້ອງຕະລ່າງມາໃສ່ໄວ້ ຍາມເພິ່ນເຮັດກິນຈຶ່ງແມ່ນສະດວກ

ມື້ຫນຶ່ງຝົນຕົກແຮງ ແລະ ລົມພັດນີ້ ແມ່ໄດ້ປະນ້ອງນ້ອຍໄວ້ນຳຂ້ອຍ ເມື່ອເພິ່ນວາງມັນໃສ່ອູ່ຂ້ອຍກໍ່ຈັບ ເຊືອກໄກວ ແລະ ກ່ອມມັນນອນ ຄັນນ້ອງນອນຫຼັບແລ້ວຂ້ອຍກໍ່ ເອົາປຶ້ມອ່ານ ປ. 3 ຂອງອ້າຍທີ່ລາວຮຽນປີກາຍນີ້ມາຫັດອ່ານ ຂ້ອຍບໍ່ອ່ານແຮງ ເພາະຢ້ານນ້ອງຕື່ນ ເມື່ອອ່ານປຶ້ມໄດ້ 3-4 ຫນ້າຂ້ອຍກໍ່ໄປຫາເຂົ້າໄວ້ຫນຶ້ງແລງ ເມື່ອນ້ອງຕື່ນຂ້ອຍກໍ່ຫາເຂົ້ານ້ຳປ້ອນ ເພື່ອບໍ່ໃຫ້ມັນແອ່ວ ເວລາແມ່ກັບ ມາແຕ່ນາ ເຫັນເດີ່ນບ້ານ ແລະ ເຮືອນຊານສະອາດ ຜູ້ໃດກໍ່ດີໃຈ ແລະລືມຄວາມອິດເມື່ອຍ ໃນໄລຍະພັກຮຽນນີ້ ຂ້ອຍຮູ້ສຶກດີໃຈຫຼາຍທີ່ໄດ້ຊ່ອຍວຽກພໍ່ແມ່

## ແປສັບ

| คำศัพท์ | ความหมาย |
| --- | --- |
| ສຸມໃສ່ | ຕັ້ງຫນ້າໃສ່ ເອົາໃຈໃສ່ |
| ໄກວ | ເຮັດໃຫ້ເຫນັງຕີງໄປມາ |

## ຄຳຖາມ

1. ເມື່ອພັກຮຽນ ເຈົ້າເຮັດຫຍັງຊ່ອຍພໍ່ແມ່ເຈົ້າແດ່
2. ເປັນຫຍັງລາວຈຶ່ງດີໃຈ ເມື່ອໄດ້ຊ່ອຍວຽກພໍ່ແມ່
3. ເພື່ອຍົກລະດັບຊີວິດການເປັນຢູ່ໃຫ້ດີຂຶ້ນ ພວກເຂົາເຮັດແນວໃດ

# ປ່ຽນອາຊີບລົງເຮັດນາ

ພວກພໍ່ຄ້າແມ່ຄ້າທົ່ວປະເທດ ໄດ້ປ່ຽນອາຊີບລົງເຮັດນາຢ່າງເປັນຂະບວນຟົດຟື້ນ ເນື່ອງຈາກວ່າມັນເປັນອາຊີບທີ່ມີການຮັບປະກັນຢ່າງໝັ້ນຄົງ ເວົ້າແທ້ໃນລະບອບເກົ່າ ພໍ່ຄ້າແມ່ຄ້ານ້ອຍເຫຼົ່ານີ້ ແມ່ນມາຈາກຊາວໄຮ່ຊາວນາຍ້ອນອາດຍາເຈົ້ານາຍກົດຂີ່ຂູດຮີດ ປີດຈ່ອງ ຕົ້ນໄຮ່ຕົ້ນນາ ເນື່ອບໍ່ມີບ່ອນທຳມາຫາກິນ ຈຶ່ງໄດ້ທະຍອຍກັນເຂົ້າມາອາໄສຢູ່ໃນເມືອງ ເພື່ອຫາລ້ຽງຊີບໃນທາງຮັບຈ້າງແລະຄ້າຂາຍ ເລັກໆນ້ອຍໆ ເຊິ່ງເປັນອາຊີບທີ່ບໍ່ແນ່ນອນ ຈຶ່ງເຮັດໃຫ້ຫຼາຍຄອບຄົວ ງົກອົດຢາກປາກໝອງແລະຂາດເຂີນ

ໃນລະບອບໃໝ່ ມັນໄດ້ສ້າງເງື່ອນໄຂອັນສະດວກໃຫ້ແກ່ເຂົາເຈົ້າ ປະກອບສ່ວນເຂົ້າໃນການຂະຫຍາຍການຜະລິດກະສິກຳ ເພື່ອຍົກລະດັບຊີວິດການ ເປັນຢູ່ໃຫ້ດີຂຶ້ນ ດັ່ງນັ້ນ ເຂົາເຈົ້າຈຶ່ງຕັດສິນໃຈກັບ ຄືນເມືອ ປະກອບອາຊີບເດີມ ຂອງຕົນຢ່າງຫ້າວຫັນ ສະເພາະຜູ້ທີ່ຍັງຄ້າຂາຍຢູ່ນັ້ນອຳນາດການປົກຄອງປະຕິວັດກໍ່ໄດ້ຊ່ວຍເຫຼືອ ໃນການປ່ຽນອາຊີບ ໃໝ່ທັງນີ້ກໍ່ເພື່ອເຮັດ ໃຫ້ຊີວິດການ ເປັນຢູ່ຂອງປະຊາຊົນ ມີການຮັບປະກັນແລະສອດຄ່ອງກັບລະບອບໃໝ່

## ແປສັບ

| คำศัพท์ | ความหมาย |
|---|---|
| ຮັບປະກັນ | ແນ່ນອນ ໝັ້ນຄົງ |
| ກົດຂີ່ຂູດຮີດ | ບັງຄັບ ຂົ່ມເຫັງ |
| ເງື່ອນໄຂ | ຂໍ້ຄວາມທີ່ສາມາດແກ້ໄຂໄດ້ |
| ຜະລິດກະສິກຳ | ຂະຫຍາຍການປູກຝັງ |

## ຄຳຖາມ

1. ຊາວໄຮ່ຊາວນາໃນລະບອບເກົ່າເປັນແນວໃດ
2. ເປັນແນວໃດພວກເຂົາເຈົ້າຈຶ່ງປ່ຽນອາຊີບລົງເຮັດນາ
3. ລະບອບໃໝ່ໄດ້ສ້າງຫຍັງໄວ້ໃຫ້ພວກເຂົາ

## ຄວາມຮັ່ງມີຂອງປະເທດເຮົາ

ປະເທດລາວເຮົາມີພູຜາປ່າດົງ ແລະ ທິວທັດອັນຈົບງາມຢູ່ຫຼາຍແຫ່ງ ເປັນຕົ້ນແມ່ນຢູ່ທາງພາກໃຕ້ຄືປາກຊ່ອງບໍລະເວນ ປະຊາຊົນເຮົາ ເຄີຍຍ້ອງຍໍວ່າເປັນບ່ອນດິນດີສຳລັບປູກຜັກ ແລະ ລ້ຽງສັດ ພ້ອມທັງມີອາກາດສົດໃສເຢືອກເຢັນຕະຫຼອດປີ

ປ່າດົງໃນປະເທດເຮົາມີໄມ້ຫຼາຍຊະນິດທີ່ມີຄຸນຄ່າສູງ ເຊັ່ນ ໄມ້ສັກ ໄມ້ຄະຍູງ ໄມ້ດູ່ ໄມ້ແດງ ໄມ້ແຄນ ໄມ້ຍາງ ໄມ້ກໍ່າພີ້ ໄມ້ໄລ່ງເລ່ງ ແລະອື່ນໆ ນອກຈາກນີ້ເຮົາຍັງມີໄມ້ສຳຄັນອີກຫຼາຍແນວທີ່ໃຊ້ເຮັດຢາ ພື້ນເມືອງເພື່ອປິ່ນປົວຄົນເຈັບ

ແຕ່ເໜືອຕະຫຼອດໃຕ້ ຍັງມີແມ່ນ້ຳລຳເຊຫຼາຍສາຍໄຫຼຜ່ານປະເທດເຮົາ ແມ່ນ້ຳເຫຼົ່ານີ້ລ້ວນແຕ່ເປັນປະໂຫຍດອັນໃຫຍ່ຫຼວງໃຫ້ແກ່ປະຊາຊົນ ໃນການໄປມາຫາສູ່ ການປູກຝັງ ແລະ ເຮັດເຂື່ອນໄຟຟ້ານ້ຳຕົກ ຢູ່ບາງທ້ອງຖິ່ນເຮົາຍັງມີທົ່ງພຽງ ແລະ ທົ່ງຫຍ້າຫຼາຍບ່ອນທີ່ເໝາະສົມກັບການເຮັດນາປູກເຂົ້າແລະສະຖານທີ່ລ້ຽງສັດໄດ້ດີ ສິ່ງທີ່ສຳຄັນອີກແນວນຶ່ງ ທີ່ເຮົາມີຢ່າງຫຼວງຫຼາຍ ກໍ່ຄື ບໍ່ໄລທະຫາດຕ່າງໆ ເຊັ່ນ ບໍ່ຖ່ານຫີນ ມີຢູ່ແຂວງຜົ້ງສາລີ ຊຽງຂວາງ ຊຳເໜືອ ແລະ ວຽງຈັນ ບໍ່ກົ່ວ ບໍ່ຊືນ ມີຢູ່ແຂວງຄຳມ່ວນ ຊຽງຂວາງ ບໍ່ຄຳມີຢູ່ແຂວງອັດຕະປື ຄຳມ່ວນ ວຽງຈັນ ຊຽງຂວາງ ຫຼວງພະບາງ ສະຫວັນນະເຂດ ບໍ່ໄລທະຫາດເຫຼົ່ານີ້ ສ່ວນຫຼາຍຍັງບໍ່ທັນໄດ້ຂຸດຄົ້ນຂຶ້ນມາ ເທື່ອ ຊູ່ມື້ນີ້ ທາງພັກ ແລະ ລັດໄດ້ວາງໂຄງການຈະຂຸດຄົ້ນເອົາສົມບັດ ອັນລ້ຳຄ່າເຫຼົ່ານີ້ ຂຶ້ນມາສ້າງສາປະເທດຊາດຂອງເຮົາ ເວົ້າແທ້ ປະເທດເຮົາແມ່ນປະເທດທີ່ຮັ່ງມີ ດ້ວຍຊັບພະຍາກອນທຳມະຊາດ ບໍ່ນ້ອຍໜ້າປະເທດອື່ນໆໃນໂລກ ພວກເຮົາຫວງແຫນຜືນແຜ່ນດິນຕອນນີ້ ຈະບໍ່ຍອມໃຫ້ຈັກກະພັດອາເມລິກາ ແລະ ສັດຕູຕົວໃດໆມາທຳລາຍມ້າງເພຢ່າງເດັດຂາດ

### ແປສັບ

| คำศัพท์ | ความหมาย |
|---|---|
| ທິວທັດ | ຮູບພາບທີ່ເຮົາຫຼຽວເຫັນ |
| ຢາພື້ນເມືອງ | ຢາຮາກໄມ້ຫຼືຕົ້ນໄມ້ທີ່ເຮົາໃຊ້ຝົນ ຫຼື ຕົ້ມກິນເພື່ອປົວພະຍາດ |
| ໂຄງການ | ແຜນການ ວຽກທີ່ຈະເຮັດຂຶ້ນ |

ສິນບັດ ສິ່ງຂອງ ເງິນຄຳ

ບໍ່ນ້ອຍໜ້າ ບໍ່ຕ່ຳ ຕ້ອຍ ບໍ່ຫຼຸດ

## ຄຳ ຖາມ

1. ປະເທດລາວເຮົາມີໄມ້ທີ່ມີຄຸນຄ່າສູງ ມີໄມ້ຫຍັງແດ່
2. ແມ່ນ້ຳລຳເຊມີປະໂຫຍດແນວໃດແດ່
3. ໄລຫະທາດຕ່າງໆໃນລາວມີຫຍັງແດ່
4. ລັດເພິ່ນມີໂຄງການ ແນວໃດກັບໄລຫະທາດທີ່ ເອີ້ນເກືອງນີ້

## ນິທານ

### ຄວາຍສາມັກຄີຂ້າເສືອ

ຝູງຄວາຍພວມກິນຫຍ້າຢູ່ແຄມປ່າ ຫຼຽວໄປເຫັນມ້າໂຕໜຶ່ງແລ່ນຕາທີ່ຕາລາມມາ ເບິ່ງຄືຈັ່ງຕົກສະທ້ານຢ້ານກົວຫຼາຍ ຄວາຍເຖົ້າໃຫຍ່ທີ່ເປັນຫົວໜ້າຝູງ ເງີຍຄໍຂຶ້ນແລ້ວຖາມວ່າ ມ້າເອີຍ! ເຈົ້າມີອຸກາບິການຫຍັງ ຈິ່ງແລ່ນຟ້າວຟັ່ງແທ້ ? ມ້າທັງເສົ້າທັງສັ່ນຕອບວ່າ "ອັນຕະລາຍໃຫຍ່ແລ້ວ ! ເສືອຈັບແມ່ພະໄປກິນໝົດ ພວກເພື່ອນຈິ່ງແລ່ນໜີໄວໆ! ກົວບໍ່ດັ່ງນັ້ນຈະພາກັນຕາຍເປັນອາຫານເສືອໝົດແລ້ວ" ກ່າວສຸດຄວາມ ມ້າກໍ່ທຳ ທ່າຈະແລ່ນຕໍ່ໄປ ຄວາຍຫົວໜ້າຝູງຂວາງໄວ້ ພ້ອມກັບກ່າວຂຶ້ນວ່າ : "ຢ່າແລ່ນໄປອີກ ກິນຫຍ້ານຳພວກເຮົາດີກວ່າ"

ຄວາຍເຖົ້າໂຕບ່າວແອງເອົ້າເຊີບຂຶ້ນວ່າ : " ກົວເສືອມພ້ອງຈະຊິດທ້ອງ ໃຫ້ໄສ້ມັນຫຼຸອອກ" ຄັນຈະແລ່ນໄປ ແຕ່ໂຕຜູ້ດຽວກໍ່ຊ່ຳພັດຢ້ານ ມ້າເລີຍຕັດສິນໃຈກິນຫຍ້າຢູ່ນຳຄວາຍເພື່ອວ່າເວລາກັບຈະມີໝູ່ຝູງ ພໍຕາເວັນບ່າຍ ຝູງຄວາຍກໍ່ ເຊົາກິນຫຍ້າ ຊວນກັນກັບບານລ່ງຄວາຍເຖົ້າທີ່ເປັນຫົວໜ້າຝູງພາທາງໄປໄດ້ໜ້ອຍໜຶ່ງກໍ່ເງີຍຫົວຂຶ້ນ ຍົກປາກສິບເອົາປົ່ມ ແລະຮ້ອງຂຶ້ນວ່າ : " ງວາ ! ງວາ !" "ມັນໃຫ້ສັນຍາວ່າ ຈະມີໄພເກີດຂຶ້ນ ໃຫ້ທຸກໂຕກຽມພ້ອມ!"

ຫົວໜ້າຝູງພໍເວົ້າຈົດຄວາມ ຕົກລົງກັນຮຽບຮ້ອຍແລ້ວ ຄວາຍນັກນ້ອຍແລ່ນເຂົ້າທາງອົງ ຄວາຍໃຫຍ່ ຢືນຢູ່ນອກເຂັດ ຕາ ແດງໆ ຫູຊັນຕັ້ງທ່າຄອຍກຽມທີ່ຈະຊິດໂລດ ເມື່ອເສືອໂດດເຂົ້າມາ ມ້າເຫັນ

ໝູ່ຄວາຍເຮັດເປັນລະບຽບຄັ້ງນັ້ນກໍ່ເສີຍເຂົ້າຢູ່ໃນດົງ ເສືອຢູ່ໃນປ່າກະໂດດຊວາດອອກມາໄວປານລົມ ກະວ່າຈະຄຸບເອົາມ້າ ໃນຂະນະດຽວກັນນັ້ນ ຝູງຄວາຍກໍ່ໃຊ້ເຂົາຊິດເສືອ ເຮັດໃຫ້ມັນກະເດັນອອກໄປ ປະມານສອງສາມແມັດ

ເມື່ອກີງາຊິນໂດຍບໍ່ຮູ້ສຶກຕົວແນວນັ້ນ ມັນກໍ່ເກີດໄບໄທ ແລ້ວກະໂດດເຂົ້າໄປອີກ ຍັງມີ ກຽມຈະຕົບ ພໍໄດ້ຍິນສຽງຄວາຍໂຕຫົວໜ້າຝູງຮ້ອງຂຶ້ນວ່າ : "ຕະລຸມບອນ!" ຝູງຄວາຍກໍ່ພຸ່ງເຂົ້າໃສ່ ບາງໂຕກໍ່ຊິດຕາ ບາງໂຕກໍ່ໃຊ້ເຂົາຊິດຄໍ ບາງໂຕກໍ່ຊົນທ້ອງ ຊິດໃສ່ກະດູກຂ້າງກະດູກຫຼັງ ເຮັດໃຫ້ເສືອໜ້າມືດຕາມົວໄປຈົນບໍ່ຮູ້ຈະຮັບໝັດໃດ ໃນຂະນະດຽວກັນນັ້ນ ມ້າກໍ່ຍົກສອງຂາຫຼັງດີດໃສ່ຕາເສືອ ຈົນມັນປິ່ນຄວ້າງໆ ໄປ ເລືອດແດກອອກຈາກ ປາກ ຈາກດັງບໍ່ຢຸດຊິດໆ ເມື່ອເຫັນວ່າຫົມອ່ອນແຮງເຕັມທີ ແລ້ວ ເສືອກໍ່ເສີຍແກວ່ງຫົວ ທຳທ່າຈະແລ່ນໜີ ຄວາຍໂຕບ່າວແວງກໍ່ກະໂດດໃສ່ອີກ ເອົາເຂົາເນັ້ນຫົວເສືອແນບໃສ່ດິນ ເລືອດຕາແດກຊະອອກ ພໍດີຄວາຍເຖິກ ໂຕຫົວໜ້າຝູງກໍ່ໂດດຊິດອີກບາດໜຶ່ງພໍດີກີງາຫົວໃຈເສືອເສີຍໃຈຂາດຕາຍຄາທີ່ ຝູງຄວາຍໄດ້ໄຊຊະນະແລ້ວກໍ່ພາກັນກັບມາແລ່ງດ້ວຍຄວາມປິຕິຍິນດີແລະມ່ວນຊື່ນທາງຝ່າຍມ້າກໍ່ດີໃຈຫົວຮີ ໆ ຮີ ໆ ! ບອກຂ່າວໃຫ້ພີ່ນ້ອງ ບ້ານເມືອງຊາບວ່າ ເສືອເຖື່ອງກີງາຂ້າແລ້ວ

## ແປສັບ

| คำศัพท์ | ความหมาย |
|---|---|
| ເຖິກ | ສັດ ໂຕຜູ້ |
| ແລ່ງ | ບ່ອນ ຢູ່ບ່ອນນອນຂອງສັດ |

## ຄຳຖາມ

1. ເມື່ອຈະເອົາຊະນະສັດຕູ ຄວາຍແລະມ້າເຮັດຈັ່ງໃດ
2. ຍ້ອນຫຍັງຄວາຍແລະມ້າຈຶ່ງຂ້າເສືອໄດ້
3. ນິທານເລື່ອງນີ້ສອນໃຫ້ເຮົາຮູ້ແນວໃດ

## ມື້ຮຽນທ້າຍປີ

ມື້ນີ້ ນາງສູນວອນຍ່າງເຂົ້າປະຕູໂຮງຮຽນດ້ວຍຄວາມຕື້ນຕັນໃຈ ເພາະເປັນມື້ສຸດທ້າຍຂອງການຮຽນໃນປີນີ້ ໝູ່ຄູ່ພາກັນມາຄົບໜ້າຄົບຕາ ແລະ ຜູ້ໃດກໍ່ມາເຊົ້າກວ່າປົກກະຕິ ເພື່ອຈະໄດ້ມີໂອກາດພົບພໍ້ສັ່ງລາກັນຈະຈາກໄປ ສຽງກະແລ່ງດັງຂຶ້ນແກ່ງໆ ບອກເຕືອນໃຫ້ເຂົ້າຫ້ອງຮຽນ ພວກນັກຮຽນພາກັນນັ່ງປະຈຳທີ່ຂອງໃຜລາວຢ່າງຮຽບຮ້ອຍເພື່ອຕັ້ງໃຈຟັງຄຳຕັກເຕືອນຂອງຄູ ຕໍ່ຈາກນັ້ນນາງສົມຈັນຄູປະຈຳຫ້ອງໄດ້ກ່າວຢ່າງສະຫງົບສະໜິມວ່າ ນັບແຕ່ມື້ອື່ນຕໍ່ໄປ ທາງໂຮງຮຽນອັດການຮຽນປະຈຳປີ ທຸກຄົນກໍ່ຈະໄດ້ໄປຢູ່ຄອບຄົວໃຜລາວ ເພື່ອຊ່ອຍເຫຼືອພໍ່ແມ່ເຮັດວຽກໄຮ່ນາແລະອື່ນໆ ຄູສົມຈັນເຫຼືອດຕາເບິ່ງໄປທົ່ວຫ້ອງດ້ວຍສີຫນ້າອັນເບີກບານ ແລະ ເວົ້າດ້ວຍຄວາມຫ່ວງໃຍອາໄລວ່າ ຫຼັງຈາກອັດການຮຽນເທື່ອນີ້ແລ້ວ ຕໍ່ໄປໃນປີຮຽນໃໝ່ໝູ່ເຈົ້າຈະຂື້ນຫ້ອງໃໝ່ ແລະຮຽນນຳຄູອື່ນ ຂ້ອຍຈະບໍ່ມີໂອກາດສອນພວກເຈົ້າອີກ ຂ້ອຍຂໍເຕືອນພວກເຈົ້າຈົ່ງເປັນຜູ້ວ່ານອນສອນງ່າຍແລະດຸໝັ່ນ ຮໍ່າຮຽນໃຫ້ໄດ້ດີ ຂ້ອຍຮູ້ສຶກເປັນຫ່ວງ ແລະ ຄິດຮອດພວກເຈົ້າທີ່ສຸດ ທຸກຄົນໃນຫ້ອງໃຜກໍ່ຕັ້ງໃຈຟັງແລະຄິດທວນຄືນຫຼັງການຮຽນໃນປີທີ່ຜ່ານມາ ຄູໄດ້ເອົາໃຈໃສ່ອົບຮົມສັ່ງສອນເປັນຢ່າງດີ ມື້ອື່ນຈະໄດ້ພັດພາກຈາກຄູໄປແລ້ວ ໃຜກໍ່ຮູ້ສຶກອາໄລ ແລະ ຄິດຮອດນັກຮຽນທັງຫຼາຍຕ່າງກໍ່ສັນຍາວ່າຈະປະຕິບັດຕາມຄວາມຂອງຄູທີ່ໄດ້ສັ່ງສອນໄວ້ທຸກຢ່າງ

### ແປສັບ

| ຄຳສັບ | ຄວາມໝາຍ |
|---|---|
| ປົກກະຕິ | ບໍ່ປ່ຽນແປງ ບໍ່ປ່ຽນໄປຈາກເດີມ |
| ຫ່ວງໃຍອາໄລ | ຄິດຮອດ ຄິດເຖິງ |
| ວ່ານອນສອນງ່າຍ | ຟັງຖ້ອຍຟັງຄວາມ |

### ຄຳຖາມ

1. ຮອດມື້ພັກຮຽນທ້າຍປີພວກນັກຮຽນເຮັດແນວໃດ
2. ຄູຕັກເຕືອນນັກຮຽນຫຍັງແດ່ ແລະນັກຮຽນປະຕິຍານຕໍ່ຄູແນວໃດ
3. ຄູສົມຈັນມີຄວາມເວົ້າທີ່ຫ່ວງໃຍນັກຮຽນເພີ່ນວ່າແນວໃດ

# ປີໃໝ່ລາວ

ປີເກົ່າກາຍຜ່ານຂ້າມໄກຫ່າງເຮົາໜີ
ປີໃໝ່ວຽນມາເຖິງເບີກບານເບົາເນື້ອ
ປະຊາຊົນເໜືອໃຕ້ຍິງຊາຍນ້ອຍໃຫຍ່
ໃຜກໍ່ຊົມຊື່ນຫ້າວສະໜານໝັ້ນຕໍ່ກັນ
ສາວບ່າວທຸກສ່ຳຊັ້ນພ້ອມພໍ່ຊາວຊະລາ
ພາກັນປະແນວຄຶດເກົ່າເດີມດາທີ້
ຮັບທີພາໝອງເສົ້າງົມງາຍຕ້ອຍຕ່ຳ
ນຳແນວຄຶດຮຸ່ງແຈ້ງ ສັງຄົມນິຍົມເຂົ້າຢູ່ແທນ
ແມ່ນອົງການທຸກດ້ານໂຮມຮ່ວມແຮງຜະລິດ
ກິດຈະການສັງຄົມລາວແມ່ນລາວເປັນເຈົ້າ
ບ່ໃຫ້ໃຜເພມ້າງທຳລາຍປົ້ນປຸ້ນ
ກຳເອົາໄຊຊະນະແໜ້ນໃຫ້ຍືນໝັ້ນຮຸ່ງໃສ
ປູກພືດຜົນໝາກໄມ້ລ້ຽງໄກ່ເປັດປາ
ຂຸດເໝືອງຝາຍນາລວມຮ່ວມກັນຊົມສ້າງ
ລົບລ້າງໄພຫິວແຫ້ງຊີງເອົາໄຊໃໝ່
ໃຫ້ລາວກ້າວຜ່ານຂຶ້ນສັງຄົມນິຍົມຜູ່ບ່ອນໝາຍ

## ແປສັບ

| คำศัพท์ | ความหมาย |
|---|---|
| ເບົາເນື້ອ | ລົ່ງຈິດລົ່ງໃຈ ຮ່າງກາຍແຂງແຮງ |
| ສະໜານໝັ້ນຕໍ່ກັນ | ສາມັກຄີຊ່ອຍເຫຼືອຮັກແພງກັນ |
| ກິດຈະການ | ອົງການ |
| ພືດຜົນ | ເຄື່ອງປູກຝັງ |

## ຄຳຖາມ

1. ປີໃໝ່ລາວປະຊາຊົນເຫັນໄດ້ເປັນແນວໃດ
2. ເປັນຫຍັງພວກເພິ່ນຈຶ່ງພາກັນປະແນວຄິດເກົ່າເດີມດາທີ້
3. ປະຊາຊົນເພິ່ນເຮັດຫຍັງແດ່ເພື່ອໃຫ້ສັງຄົມນິຍົມບັນລຸເປົ້າໝາຍ

## ຕອນແລງຍາມຮ້ອນ

ຕອນແລງນີ້ເບິ່ງໃນລະດູຮ້ອນ ແສງແດດສີເຫຼືອງແກ່ນົງ ໆ ຄ່ອຍຈາງລົງ ດວງຕາເວັນແດງຂອບຂາວເຫຼື້ອມ ໆ ພວມທິດລົດສະເໜີຕົ້ນເຂົ້າ ທ້າວຄຳແດງຈູງຄວາຍກັບມາແລ້ງພໍຮອດບຶງທົ່ວບ້ານ ລາວກໍ່ຍາມເຊືອກໃຫ້ຄວາຍແນບນ້ຳ ຄວາຍພັບຫູແກວ່ງຫາງເອົາຫົວມູດລົງ ໃນນ້ຳອັນໃສເຢັນ ມັນບໍ່ຄື້ນຂຶ້ນຫາຍໃຈພູດຟາດຊິດເຂົ້າໄປມາ ລາວປ່ອຍໃຫ້ມັນຫຼິ້ນຢູ່ເທິງເດີນ ແລ້ວຈຶ່ງຈູງມັນຂຶ້ນ ຈາກນ້ຳ ຄວາຍຝູງອື່ນຂອງຊາວບ້ານ ພໍມາຮອດບຶງໄດໃດກໍ່ຟ້າວແນບນ້ຳເໝືອນກັນຍ້ອນວ່າຄວາຍມັກຄວາມເຢັນຫຼາຍກວ່າງົວ

ຕາມເສັ້ນທາງກັບເມືອບ້ານ ບໍ່ວ່າຍິງຊາຍ ນ້ອຍໃຫຍ່ ຍ່າງຕາມຫຼັງກັນເປັນລຸດ ໆ ຢ່າງມີການຈັດຕັ້ງ ເຂົາເຈົ້າໄດ້ອອກໄປທຳມາຫາກິນຕັ້ງແຕ່ເຊົ້າ ບາງຄົນໄປໄຮ່ ໄປສວນ ໄປຫາຫຼົວຫາຟືນແລະອື່ນ ໆ ເມື່ອຮອດຍາມແລງກໍ່ພາກັນກັບເມືອເຮືອນດ້ວຍຄວາມເບີກບານຕໍ່ວຽກງານທີ່ຕົນໄດ້ເຮັດສຳເລັດໃນມື້ນັ້ນ ບາງຄົນພະຍຸງຍ່າມ ແບກຂວານ ແບກຈົກ ຫາບບຸງ ຫາບຫຼົວຟືນຄ່ອຍຫຼັ່ງໄຫຼເຂົ້າບ້ານ ພໍຮອດຫົວຄ່ຳ ດວງເດືອນຮູບກ່ຽວໄດ້ສ່ອງແສງໃນ ນວນນົວ ໆ ລົງສູ່ເດີ່ນບ້ານ ສຽງເວົ້າ ສຽງຫົວ ສຽງອ່ານໜັງສື ແລະສຽງຮ້ອງລຳທຳເພງດັງກ້ອງມ່ວນຊື່ນໄປທົ່ວບ້ານ

ຢູ່ຕາມໝູ່ບ້ານ ທຸກຄອບຄົວລາວເມື່ອກິນເຂົ້າແລງແລ້ວຕາມທຳມະດາ ພໍ່ແມ່ແລະລູກເຕົ້າເຂົ້າລົມກັນເຖິງກິດຈະການກ່ຽວກັບຊີວິດປະຈຳວັນຂອງຄອບຄົວໝົດທຸກຄົນພ້ອມກັບຊື່ນຊົມໃນສິ່ງທີ່ໄດ້ຮັບຜົນປະໂຫຍດແລະບາງເທື່ອກໍ່ໂສກເສົ້າເຫງົາໃຈໃນຄວາມເດືອດຮ້ອນທີ່ເກີດຂຶ້ນເມື່ອມີບັນຫາຄວາມຫຍຸ້ງຍາກກໍພິຈາລະນາຊ່ວຍກັນແກ້ເວລາຫວ່າງວຽກພໍ່ແມ່ກໍເລົ່ານິທານຫຼືອ່ານໜັງສືສູ່ພວກລູກຟັງແລ້ວຈຶ່ງພາກັນເຂົ້ານອນ

## ແປສັບ

| คำศัพท์ | ความหมาย |
|---|---|
| ເຫຼືອງແກ່ນົງໆ | เหลืองแก่สดใสจ้า |
| ດວງຕາເວັນ | ดวงอาทิตย์ |
| ພອນທິດ | กำลังลดต่ำลง |
| ສະເໝີເຂົ້າ | เสมอต้นข้าว |
| ແລ່ງ | ที่นอนของควาย |
| ຍານເຊືອກ | ผ่อนเชือก |
| ແມບນ້ຳ | ลงแช่น้ำ |
| ມຸດລົງນ້ຳ | ดำลงไปในน้ำ |
| ຍໍຄໍ | ชูคอ ยกคอ |
| ຊິດເຂົາ | สะบัดเขา |
| ຫຼິ້ນຢູ່ | เล่นอยู่ |
| ເຫິງເຕີບ | นานพอสมควร |
| ຟ້າວ | รีบ |
| ເມືອບ້ານ | กลับบ้าน |
| ຍ່າງ | เดิน |
| ເປັນລຸດໆ | เป็นสาย จำนวนมาก |
| ການຈັດຕັ້ງ | การเตรียมการ การจัดระเบียบ |
| ຫາຫຼົວຫາຟືນ | หาไม้ไผ่แห้ง หาฟืน |
| ຍາມແລງ | เวลาใกล้ค่ำ เวลาเย็น |
| ແບກຈົກ | แบกจอบ |
| ດວງເດືອນ | ดวงจันทร์ |
| ເດີ່ນບ້ານ | สนามหน้าบ้าน |

| | |
|---|---|
| ສຽງເວົ້າ | เสียงพูด |
| ສຽງຫົວ | เสียงหัวเราะ |
| ມ່ວນຊື່ນ | สนุกสนาน |

## ຄຳຖາມ

1. ທ້າວຄຳແດງຈູງຄວາຍໄປໃສ
2. ພໍຮອດບຶງທົ່ງບ້ານທ້າວຄຳແດງໄດ້ເຮັດຫຍັງ
3. ຍິງຊາຍນ້ອຍໃຫຍ່ເຂົາເຈົ້າພາກັນຍ່າງໄປໃສ
4. ສຽງເວົ້າສຽງຫົວ ສຽງອ່ານໜັງສື ແລະສຽງຮ້ອງເພງ ເປັນສຽງຂອງໃຜ
5. ໃນຕອນແລງຍາມຮ້ອນພວກເຈົ້າໄດ້ເຫັນຫຍັງແດ່

## ທຸງເຂັ້ມແຕ່ງກິນແຊບ

ນີ້ແມ່ນຄຳສັນລະເສີນຊົມເຊີຍຂອງພະນັກງານທະຫານຕໍ່ສະຫາຍຂອງອ້າຍລ້ຽງຂອງກອງພັນ 705 ກອງທັບປົດປ່ອຍປະຊາຊົນລາວເມື່ອເຂົ້າເປັນທະຫານ ທ້າວກອງ ໄດ້ຮັບໜ້າທີ່ເປັນອ້າຍລ້ຽງລາວໄດ້ຮັບໜ້າທີ່ອັນມີກຽດນັ້ນດ້ວຍຄວາມເບີກບານທ້າວທັນ ມີແຕ່ລາວຮູ້ສຶກສົງໄສໃນໃຈຕົນເອງວ່າເປັນອ້າຍລ້ຽງເຮັດແນວໃດ ຈຶ່ງຈະດີສົດຊູໄດ້ນຳເພິ່ນ? ແຕ່ໃນໄລຍະຕໍ່ມາທ້າວກອງກໍ່ຄ່ອຍມີຄວາມຮູ້ສຶກຕື່ນໂຕ ລາວຄຶດວ່າ ລ້ຽງກອງທັບເກັ່ງ ເຮັດໃຫ້ກອງທະຫານໄດ້ກິນອີ່ມມີສຸຂະພາບເຂັ້ມແຂງກໍ່ສົມຊື່ວ່າເປັນຜູ້ປະກອບສ່ວນອັນສຳຄັນໃນການແຕ່ງຢູ່ຄືກິນໃຫ້ພະນັກງານ ແລະນັກຮົບໂດຍບໍ່ຢຸດຢ່ອນລາວພະຍາຍາມເອົາໃຈໃສ່ນັບແຕ່ເຂົ້າແລະເກືອເມັດນຶ່ງຂຶ້ນໄປ ບໍ່ໃຫ້ຕົກເຮ່ເສຍຫາຍ ທ້າວກອງຮັບໜ້າທີ່ອ້າຍລ້ຽງຫຍຸ້ງຍາກສັບສົນປານໃດກໍ່ຕາມແຕ່ລາວພະຍາຍາມຍາດເວລາຮ່ຳຮຽນວິທີໃຊ້ອາວຸດຈະມີດຕ່າງໆໄດ້ດີ

ໃນກອງປະຊຸມສະຫຼຸບຜົນງານປະຈຳປີ ທ້າວກອງເຄີຍ ໄດ້ຮັບຄັດເລືອກເປັນຕົວເດັ່ນ ທ້າວກອງໄດ້ພະຍາຍາມຫາຜັກຫາໜໍ່ໄມ້ ໜໍ່ຫວາຍ ເຫັດ ແລະປາມາເພີ່ມເປັນອາຫານ ເມື່ອການລຳລຽງກີດຕິດຂັດ ເຄື່ອງກິນຂາດເຂີນທ້າວກອງກໍ່ ໄດ້ຊອກຫາມາໃຫ້ທາງ ມີມື້ນຶ່ງເຫັນວ່າເຄື່ອງກິນນີ້ໜ້ອຍລາວກໍ່ສະແດງທ່າທີເອົາເລື່ອງມາເວົ້າໃຫ້ເບີກບານມ່ວນຊື່ນປານຄິດວ່າການກິນເຂົ້າໃນເວລານັ້ນ ຜູ້ໃດກໍ່ກິນແຊບແລະອີ່ມດີເພາະທ້າວກອງໄດ້ມີຄວາມເຂົ້າໃຈໃນໜ້າທີ່ຂອງໂຕເອງເປັນຢ່າງດີ

## ແປສັບ

| คำศัพท์ | ความหมาย |
|---|---|
| ກິນແຊບ | กินอร่อย |
| ສະຫາຍ | เพื่อนสนิท |
| ອ້າຍລ້ຽງ | พี่เลี้ยง |
| ທ້າວທັນ | กระตือรือร้น |
| ຕີສັດຕູ | ตีข้าศึก |
| ໄລຍະ | ระยะ |
| ສິນຊື່ | ได้ชื่อว่า |

## ຄໍາຖາມ

1. ທ້າວກອງເຂົ້າເປັນທະຫານໄດ້ຮັບໜ້າທີ່ຫຍັງ
2. ນອກຈາກເປັນອ້າຍລ້ຽງແລ້ວທ້າວກອງຍັງເຮັດຫຍັງອີກ
3. ການຕີສັດຕູໃນຄວາມຄິດຂອງທ້າວກອງຄືແນວໃດ
4. ເພື່ອເຮັດໃຫ້ອ້າຍນ້ອງໄດ້ກິນແຊບກິນອີ່ມທ້າວກອງເຮັດແນວໃດ
5. ເປັນຫຍັງທ້າວກອງຈຶ່ງໄປເກັບເຫັດ ໜໍ່ໄມ້ ໜໍ່ຫວາຍ

## ຄວາມຮູ້ແມ່ນຫຍັງ

ຢູ່ໃນໂລກນີ້ມີຄວາມຮູ້ແຕ່ພຽງສອງຢ່າງຄື ຄວາມຮູ້ຢ່າງທີນຶ່ງແມ່ນວິທະຍາທຳມະຊາດ ເຊິ່ງໄດ້ແກ່ບົດຮຽນການຕໍ່ສູ້ ແລະດັດແປງທຳມະຊາດເພື່ອຮັບໃຊ້ການດຳລົງຊີວິດຂອງຄົນທັງຫຼາຍ.

ຄວາມຮູ້ຢ່າງທີສອງ ໄດ້ແກ່ຄວາມຮູ້ວິທະຍາສັງຄົມ ເຊິ່ງໄດ້ແກ່ບົດຮຽນການຕໍ່ສູ້ຂອງຊາດ ແລະສັງຄົມ ນອກຈາກສອງຢ່າງນີ້ແລ້ວບໍ່ມີຄວາມຮູ້ຢ່າງອື່ນອີກ ຄົນຜູ້ນຶ່ງຮຽນສຳເລັດຈາກມະຫາວິທະຍາໄລ ກໍ່ອາດເອີ້ນໄດ້ວ່າແມ່ນນັກຮຽນຮູ້ ແຕ່ພວກເຂົາບໍ່ທັນຮູ້ຈັກລົບເສິກ ແລະບໍ່ທັນຮູ້ ເຮັດວຽກງານອື່ນໆຫຼາຍຢ່າງ ລວມຄວາມແລ້ວວຽກງານຕົວຈິງເຂົາຍັງບໍ່ທັນ ໄດ້ປະຕິບັດແລະມີບົດຮຽນ ດັ່ງນັ້ນໝາຍຄວາມວ່າເປັນນັກຮຽນຮູ້ພຽງແຕ່ເຄິ່ງດຽວ ຄວາມຮູ້ຂອງພວກເຂົາຍັງແມ່ນຄວາມຮູ້ຮຽນນຳປຶ້ມ

ຍັງບໍ່ທັນແມ່ນຄວາມຮູ້ອັນຄົບຖ້ວນ ກໍ່ຕ້ອງເອົາຄວາມຮູ້ຂອງພວກເຂົານັ້ນ ໄປປະຕິບັດເຂົ້າໃນວຽກງານຕົວຈິງເສຍກ່ອນ ເມື່ອພວກເຂົາເຮັດໄດ້ແລະ ປະສົບຄວາມສຳເລັດ ຈຶ່ງຖືວ່າຄວາມຮູ້ທີ່ພວກເຂົາມີນັ້ນເປັນຄວາມຮູ້ທີ່ແທ້ຈິງ

## ແປສັບ

| คำศัพท์ | ความหมาย |
|---|---|
| ເອີ້ນ | เรียก |
| ອອກແຮງງານ | ออกแรงเพื่อสาธารณะ เสียสละแรงงาน |
| ຮົບເສິກ | รบศึก ออกรบ |
| ເຮັດວຽກ | ทำงาน |
| ຕົວຈິງ | ปฏิบัติจริง ได้ทำด้วยตัวเอง |
| ປຶ້ມ | ตำรา หนังสือ |
| ແມ່ນ | ใช่ ถูกต้อง |

## ຄຳຖາມ

1. ໃນໂລກເຮົານີ້ມີຄວາມຮູ້ຈັກຢ່າງມີຫຍັງແດ່
2. ຄົນທີ່ຮຽນຈົບຈາກມະຫາວິທະຍາໄລກໍ່ອາດເອີ້ນວ່າແນວໃດ
3. ຜູ້ທີ່ຮຽນຈົບມະຫາວິທະຍາໄລເປັນຜູ້ທີ່ມີຄວາມຮູ້ຄົບຖ້ວນ ແລ້ວບໍ່
4. ເຮັດແນວໃດຜູ້ທີ່ຮຽນຈົບມາຈຶ່ງຈະມີຄວາມຮູ້ຄົບຖ້ວນ
5. ຄວາມຮູ້ແມ່ນຫຍັງ ? ຈົ່ງອະທິບາຍມາໃຫ້ເຂົ້າໃຈ

## ພໍ່ແມ່ແລະຄອບຄົວຂ້ອຍ

ຄຳໝານຫາກໍ່ກັບມາແຕ່ໂຮງຮຽນ ເວລານັ້ນພໍ່ຂອງລາວກໍ່ກັບມາແຕ່ນາຄືກັນ ລາວແບກໄຖຕາມຫຼັງຄວາຍມາ ຢູ່ທາງບ້ານ ແມ່ແລະເອື້ອຍກຳລັງແຕ່ງກິນ ເມື່ອພໍ່ແລະຄຳໝານອາບນ້ຳແລ້ວຄາວນຶ່ງ ແມ່ແລະເອື້ອຍກໍ່ຍົກພາເຂົ້າມາ ໝົດທັງຄອບຄົວກໍ່ພາກັນນັ່ງອ້ອມພາເຂົ້າ ກ້ອຍແກງຫາກ

ມືອື່ ເຂົ້າກໍ່ຍັງຮ້ອນໆຜູ້ໃດກິນກໍ່ແຊບ ອີກປະການນຶ່ງ ຄາບເຂົ້ານີ້ຍິ່ງມີຄວາມແຊບທະວີຂຶ້ນໄປເພາະຄົນໃນຄອບຄົວທີ່ໄດ້ມາພ້ອມໂຮມກັນນັ້ນ ມີຄວາມສາມັກຄີພ້ອມໂຮມກັນໃນຄອບຄົວຂອງຂ້ອຍມີຄົນຢູ່ຫລາຍຄົນຄື ພໍ່ ແມ່ ອ້າຍ ເອື້ອຍ ນ້ອງຍິງ ແລະນ້ອງຊາຍ ພວກຂ້ອຍຢູ່ເຮືອນດຽວກັນໝົດທຸກຄົນ ພໍ່ກັບແມ່ເປັນຜູ້ອຸປະກາລະພວກຂ້ອຍໃຫ້ຢູ່ດີກິນດີຄົນໃນຄອບຄົວຂອງຂ້ອຍນັ້ນກໍ ແລະເຊື່ອຟັງພໍ່ແມ່ທຸກຄົນມີຄວາມຮັກແພງກັນ ແລະບໍ່ຜິດຖຽງກັນຈັກເທື່ອ ພໍ່ແລະອ້າຍກົກຂ້ອຍເຮັດວຽກຢູ່ນາແມ່ຂ້ອຍໄປຂາຍເຂົ້າສານ ຜັກແລະໄກ່ຢູ່ຕະຫລາດເອື້ອຍຂ້ອຍເຮັດວຽກຢູ່ບ້ານ ລາວບົວລະບັດກວາດປັດເຮືອນ ຕຳເຂົ້າ ທັງເຮັດຢູ່ເຮັດກິນ ນອກນັ້ນລາວຍັງໄດ້ເຮັດຫູກ ຕ່ຳຜ້າແພແລະຕາບເຄື່ອງນຸ່ງຂອງທີ່ນຸ່ງຢູ່ໃນຄອບຄົວ ຜູ້ໃດກໍ່ມີວຽກມີການເຮັດໝົດທຸກຄົນ ຍັງແຕ່ຂ້ອຍຜູ້ດຽວທີ່ຊ່ວຍເຫຼືອເພິ່ນບໍ່ທັນໄດ້ແຕ່ຂ້ອຍກໍ່ເຮັດວຽກຄືກັນແມ່ນຂ້ອຍໄປຮຽນໜັງສືທີ່ໂຮງຮຽນ ຂ້ອຍມີຈິດສາພາກພຽນຮຽນໃຫ້ໄດ້ເພື່ອໃຫຍ່ມາສິໄດ້ເປັນຄົນດີມີປະໂຫຍດແກ່ຄອບຄົວແລະປະເທດຊາດ

### ແປສັບ

| คำศัพท์ | ความหมาย |
|---|---|
| ແຕ່ງກິນ | เตรียมสำหรับอาหาร |
| ຄາວນຶ່ງ | สักครู่ |
| ອ້ອມພາເຂົ້າ | ล้อมสำหรับอาหาร |

### ຄຳຖາມ

1. ເມື່ອພໍ່ແລະຄຳຂບານອາບນ້ຳແລ້ວເພິ່ນພາກັນເຮັດຫຍັງ
2. ເປັນຫຍັງ ຄາບເຂົ້ານີ້ຍິ່ງມີຄວາມແຊບທະວີຂຶ້ນ
3. ພໍ່ແລະອ້າຍກົກຂ້ອຍເພິ່ນເຮັດວຽກຢູ່ໃສ

## ຂ້ອຍໄປນາກັບພໍ່

ອາທິດແລ້ວນີ້ ຂ້ອຍໄປນາກັບພໍ່ ນາຂ້ອຍຢູ່ລຽບຕີນດົງ ເລາະແຄມນາມີຫ້ວຍນ້ຳໃສໄຫຼຜ່ານ ຂ້ອຍເຫັນໝູ່ນົກບິນແຂ່ງໄປມາຫາກິນແມງໄມ້ ສ່ວນສິນກັນຢູ່ ຟັງສຽງນົກຈັ້ງແລະສັງກາຮ້ອງກອກກີ່ລຽງ ! ກອກກີ່ລຽງ ! ສຽງສຽງໄປຕາມສາຍລົມຍາມເຊົ້າໄດ້ຍິນແລ້ວເປັນຕາອອນຊອນແທ້

ຂ້ອຍຫຼຽວອອກໄປທົ່ງເຫັນໝູ່ຄົນໄຖນາແລະຄາດນາເປັນທີດໆຢູ່ ສຽງໄລ່ຄວາຍຮຸ້ຍຮຸ້ຍ! ປະສານກັບສຽງຮ້ອງສຽງຖາມກັນເຮີກອຫາ ເຮີກອຫາ! ພວກຜູ້ຍິງແລະຊາວໜຸ່ມທັງຫຼາຍ ພ້ອມພຽງກັນຫຼົກກ້າແລະດຳນາ ເປັນໝອດເປັນໝູ່ຢູ່ ສຽງເວົ້າສຽງຫົວຢອກໄຍກັນ ດ້ວຍຄວາມເບີກບານມ່ວນຊື່ນ ເບິ່ງແລ້ວປະກົດວ່າເຂົາເຈົ້າລືມຄວາມຮິດເມື່ອຍ

ມື້ນັ້ນຂ້ອຍເຫັນພໍ່ແອບອ້າຍຂ້ອຍໄຖນາ ການໄຖນາກໍ່ເປັນວຽກໜັກສົມຄວນສຳລັບເດັກນ້ອຍຮຸ່ນອ້າຍຂ້ອຍ ແຕ່ວ່າຄວາຍຊໍ້າພັດຊຳນານຫຼາຍໃນການແກ່ໄຖຈຶ່ງເຮັດໃຫ້ລາວໄຖນາບໍ່ເລົ່າບໍ່ຮາມ ບາງເທື່ອອ້າຍຂ້ອຍຍ່າງເຊຊ້າຍເຊຂວານຳຮ່ອງຂີ້ໄຖຈົນໂສ້ງເສື້ອປຽກມອດປອດ ແຕ່ປະກົດວ່າລາວຍັງເບີກບານມ່ວນຊື່ນແລະພູມໃຈຫຼາຍທີ່ໄດ້ປະກອບສ່ວນອອກແຮງງານ ຊ່ວຍແມ່ໃນຍາມພັກຮຽນ

ເຖິງຢ່າງໃດກໍດີເມື່ອເຖິງມື້ພັກມານແລ້ວເຮົາກໍຮູ້ສຶກດີໃຈເພາະເຮົາຈະໄດ້ເຮັດຕາມໃຈມັກ ຄວາມຈິງກໍບໍ່ແມ່ນເຮົາໄດ້ປ່ອຍປະລະເລີຍໄດ້ເສຍເວລາໄປລ້າພັກຜ່ອນຍ່ອນໃຈຫລິ້ນ ຊ່ວຍວຽກພໍ່ແມ່ເຮັດວຽກສ່ວນຕົວຊັກເຄື່ອງ ແລະອື່ນໆອີກ ແຕ່ທັງໝົດນີ້ເຮົາເຮັດດ້ວຍຄວາມຊື່ນໃຈ ເພາະບໍ່ແມ່ນເປັນການບັງຄັບ

## ແປສັບ

| คำศัพท์ | ความหมาย |
|---|---|
| ປະສານ | ประสมกัน สมทบเข้ากัน |
| ຊຳນານ | เคยทำ ทำละเอียด |
| ຕີນດົງ | ชายป่าดง |
| ແຄມນາ | ริมนา ข้างนา |
| ບິນແສ່ວ | บินร่อนไปมา |
| ສ່ອນສົນ | อย่างสับสน |
| ທີດໆ | เป็นจำนวนมาก |
| ຢອກໄຍ | หยอกล้อกัน |
| ມ່ວນຊື່ນ | สนุกสนาน |
| ຮິດເມື່ອຍ | เหนื่อย หมดเรี่ยวหมดแรง |

| | |
|---|---|
| ແອບເຝິກ | ฝึกหัด |
| ແກ່ໄຖ | ลากไถ |
| ຮ່ອງຂີ້ໄຖ | ร่องดินที่ไถ |
| ປຽກນອດປອດ | เปียกปอน เปียกหมดทั้งตัว |
| ປະກອບສ່ວນ | มีส่วนร่วม |

## ຄຳຖາມ

1. ເມື່ອໄປນານຳພໍ່ເຂົາໄດ້ເຫັນຫຍັງແດ່
2. ມີນົກຫຍັງແດ່ທີ່ມັນຮ້ອງຍາມເຊົ້າ
3. ໄດ້ຍິນສຽງນົກຮ້ອງແລ້ວລາວຮູ້ສຶກແນວໃດ
4. ພວກຜູ້ຍິງແລະຊາວໜຸ່ມທັງຫລາຍພາກັນເຮັດຫຍັງ
5. ອ້າຍຂອງຂ້ອຍເຮັດຫຍັງວ່າເປັນວຽກໜັກຫລາຍແທ້

## ແສງແດດຍາມເຊົ້າ

ພໍຕາເວັນຂຶ້ນພົ້ນຈອມພູ ລັດສະໝີສີເຫຼືອງອ່ອນທີ່ໃສເປັນກ່ຳສ່ອງໄປທົ່ວທ້ອງທົ່ງອັນຂຽວງາມ ແສງແດດສ່ອງລອດໄປເຖິງຮັງນົກອັ້ງ ເຊິ່ງມັນພວມນອນດ້ວຍຄວາມອົບອຸ່ນຢູ່ໃນຫັ້ນ ມັນຕື່ນຂຶ້ນພືປີກບິນອອກຈາກຮັງ ແລ້ວທະຍານບິນຂຶ້ນສູ່ເວຫາຮ້ອງສຽງແຈ້ວ ໆ ວ່າ :

ງາມແທ້ນໍທ່ານມະຊາດເອີຍ ! ຂ້ອຍຂໍຊົມເຊີຍຄວາມງາມແຫ່ງແສງແດດຍາມເຊົ້າທີ່ໃສແຈ້ງຮຸ່ງເຮືອງ ຂ້ອຍບິນທ່ອງທາງບິນແລະຮ້ອງລຳຫຼິ້ນຕາມໃຈມັກ ເມື່ອແສງແດດສ່ອງເຖິງມົ້ງກະຕ່າຍ ມັນຊັນຫູຂຶ້ນແລ້ວໂດດອອກສູ່ເດີ່ນຫຍ້າ ເຊິ່ງນ້ຳຄ້າງຍັງເປັນເມັດຕິດປາຍຢູ່ ມັນເຕັ້ນຄະຍ້ອກຄະແຍ້ກ ຊອກເລັມຍອດຫຍ້າອ່ອນໃນຍາມເຊົ້າເປັນອາຫານ

ເມື່ອແສງແດດສ່ອງມາຮອດປາກປະຕູເລົ້າໄກ່ ໄກ່ຜູ້ໂຕກປີນຂຶ້ນຕີປີກ ກົ່ງຄໍຂັນ "ເອິກອີເອີເອິກ" ໄກ່ແມ່ຢືດຄໍຂຶ້ນ ປ່ອນຫົວອອກມາສ່ອງເບິ່ງ ຮ້ອງກົກ ! ກົກ ! ແລ້ວກຸກເອົາລູກອອກຈາກເລົ້າໄປ ລູກແລ່ນຕາມຫຼັງຍ່າວ ໆ ມັນຄຸ້ຍເຂ່ຍດິນຫາເຫຍື່ອ ເຂ່ຍບາດໃດລູກກໍ່ຍຸ່ມຝຶກໃສ່ບາດນັ້ນ ທັງຍາດທັງຕີ້ນກັນຢູ່ເປັນປະຈຳຕະຫຼອດປີ

ເມື່ອແສງແດດສ່ອງຕ້ອງໃສ່ຮັງເຜີ້ງ  ຝູງເຜີ້ງກໍ່ຊວນກັນບິນຫິ່ງ ໆ ອອກຈາກຮັງເປັນໝູ່ ໆ ພາກັນໄປຊອກຫາດູດເກສອນດອກໄມ້ທີ່ຫາກໍ່ແຍ້ມອອກຈາກກີບແລະພອມຫອມສົດຊື່ນຢູ່

ຕົ້ນໄມ້ເປັນສິ່ງທີ່ມີຊີວິດດັ່ງນັ້ນ ມັນກໍ່ຕ້ອງການອາຫານ ອາກາດແລະແສງຕາເວັນຄືກັບຄົນເຮົາແລະສັດ ຮາກໄມ້ດູດເອົານ້ຳແລະອາຫານຈາກພື້ນດິນຂຶ້ນມາລ້ຽງຕົ້ນຂອງມັນ  ໃບໄມ້ມີໜ້າທີ່ທຳການຫາຍໃຈຄືກັນກັບປອດຂອງຄົນເຮົາ ເມື່ອເຮົາປູກຕົ້ນໄມ້ຢູ່ໃນຮົ່ມ ຕົ້ນໄມ້ກໍຈະຫລ່ານເຫລືອງຫ່ຽວແຫ້ງແລະຕາຍໄປຍ້ອນວ່າມັນບໍ່ໄດ້ຮັບແສງແດດ

## ແປສັບ

| คำศัพท์ | ความหมาย |
|---|---|
| ຕາເວັນ | ดวงอาทิตย์ |
| ທີ່ໃສ | ที่สดใส ที่สว่าง |
| ເປັນກໍ່ | เป็นสาย |
| ທະຍານ | รีบไป บินไป |
| ຍູທ່າງ | มีอิสระ มีเสรีภาพ |
| ຕາມໃຈມັກ | ตามใจชอบ |
| ມຸ້ງກະຕ່າຍ | โพรงกระต่าย |

## ຄຳຖາມ

1. ເວລາແສງແດດຍາມເຊົ້າສ່ອງຂຶ້ນມາ  ຝູງສັດຕ່າງໆພາກັນເຮັດຫຍັງ
2. ນົກອ້ຽງມັນສົ່ງສຽງວ່າແນວໃດ
3. ກະຕ່າຍມັນເຮັດຫຍັງ
4. ໄກ່ຜູ້ໂຕກມັນກໍ່ຂັນວ່າຈັ່ງໃດ
5. ຝູງເຜີ້ງພາກັນໄປໃສ

## ພູຜາປ່າດົງ

ໃຫ້ແນມເບິ່ງສາຍພູທີ່ຍາວນັ້ນ ເຮົາເຫັນພັນລຽນສະຫຼັບສັບຊ້ອນກັນເປັນໄຊ້ໄງ້ສະເງົ້າ ໃນປ່າດົງພົງໄພອັນຮົກທຶບນັ້ນເຕັມໄປດ້ວຍເຄື່ອງຄ້ຳຂອງຄູນຫຼາຍແນວ ເຊັ່ນ ໄມ້ສັກ ໄມ້ແຄນ ໄມ້ແດງ ໄມ້ຈິກ ໄມ້ຮັງ ໄມ້ເປືອຍ ໄມ້ດູ່ ໄມ້ຍາງ ແລະ ໄມ້ອື່ນໆ ອັນເປັນປະໂຫຍດສຳລັບສ້າງສາບ້ານເມືອງໃນປ່າຍັງມີເສືອ ຊ້າງ ກວາງ ຟານ ແລະ ນົກ ນອກຈາກນັ້ນ ຍັງມີນ້ຳເຜີ້ງໝາກແຂ່ງ ໃບລານ ຍານ ຫວາຍ ຮາກໄມ້ ຫວ້ານຢາ ໃບພູ ແລະຍັງມີຈ່ານຕ່າງໆ

ເຖິງວ່າເຄື່ອງຄ້ຳຂອງຄູນເຮົາຫຼາຍປານນັ້ນກໍ່ຕາມ ແຕ່ປະຊາຊົນເຮົາຍັງທຸກຍາກ ເພາະພວກຈັກກະພັດຕ່າງດ້າວຮຸກຮານແລະພວກເຈົ້າຂຸນມູນນາຍທີ່ໃຊ້ອຳນາດຍຶດຈ່ອງເອົາເປັນສົມບັດສ່ວນຕົວຂອງເຂົາ ສ່ວນປະຊາຊົນລາວນັ້ນບໍ່ມີໂອກາດຊິນຳເອົາຊັບສົມບັດອອກມາໃຊ້ໄດ້ ພຽງແຕ່ເລາະຊອກຕາມປ່າເພື່ອຫາຟືນ ຫາໜໍ່ໄມ້ ເກັບເຫັດ ເຮັດໄຮ່ແລະເຮັດສວນເທົ່ານັ້ນ

ຢູ່ໃນປ່າບ້ານເຮົາມີຕົ້ນໄມ້ໃຫຍ່ແລະນ້ອຍທຸກຊະນິດ ຈົນນັບບໍ່ຖ້ວນ ໄມ້ທັງຫຼາຍເຫຼົ່ານັ້ນ ພວກພໍ່ແມ່ເຮົາໄດ້ໄປຕັດເອົາມາສ້າງເຮືອນ ສ້າງຂົວ ແລະສ້າງວັດວາອາຮາມ ມີຊາວບ້ານຫຼາຍຄົນ ອາໄສຫາກິນນຳການເລື່ອຍໄມ້ຕັດເສົາເຮືອນແລະໄມ້ທ່ອນ ລາງຄົນກໍ່ໄປຕັກນ້ຳມັນຍາງ ແລະຊອກຫາເອົາໃບເຕີຍ ທັງເກັບຊື້ຂອນດອກມາ ໄວ້ທີ່ກະບອງນອກຈາກນີ້ຍັງມີຕົ້ນໄມ້ໃບໄມ້ ແລະຮາກໄມ້ຫຼາຍຢ່າງທີ່ໃຊ້ເປັນຢາປົວພະຍາດຂອງຄົນແລະສັດ ປ່າດົງເປັນປະໂຫຍດແກ່ເຮົາຫຼາຍຊາວບ້ານສ່ວນນຶ່ງອາໄສປ່າດົງລ້ຽງຊີວິດມາຈົນເທົ່າຄູ່ມື້ນີ້ ພວກເຂົາທັງຫຼາຍຕ່າງກໍ່ມີຄວາມສຸກກັນພົດທຸກຄົນ

### ແປສັບ

| คำศัพท์ | ความหมาย |
|---|---|
| ສາຍພູ | ทิวเขา เทือกเขา |
| ລຽນ | เรียง |
| ໄຊ້ໄງ້ສະເງົ້າ | ตั้งเป็นยูกๆ |
| ເຄື່ອງຄ້ຳ | ของจุดเจือ ของที่มีค่ามีราคา |
| ຂອງຄູນ | ของที่มีประโยชน์มีราคา |
| ຫລາຍແນວ | หลายอย่าง |

| | |
|---|---|
| ຟານ | เก้ง สัตว์ป่าชนิดหนึ่ง |
| ໝາກແໜ່ງ | กระวาน เครื่องเทศพวกอบเชย |
| ຍານ | กำยาน ยางไม้ชนิดหนึ่งที่มีกลิ่นหอม |
| ຫວ້ານຢາ | หว้านยา พืชชนิดหนึ่งมีหัว |
| ຈ່ານຕ່າງ | ของป่าที่มีค่าต่างๆ |
| ປານນັ້ນ | ขนาดนั้น |
| ຍຶດຈ່ອງ | ยักยอก ดึงเอามา |
| ເລາະຊອກ | เสาะหา |

## ຄຳຖາມ

1. ເປັນຫຍັງຈຶ່ງວ່າພູຜາປ່າດົງໃນປະເທດເຮົາຮັ່ງມີ
2. ໃນປ່າດົງມີສັດຫຍັງແດ່
3. ເຄື່ອງຄ້າຂອງດົງມີຫຍັງ
4. ເປັນຫຍັງປະຊາຊົນເຮົາຈຶ່ງທຸກຍາກ
5. ປະຊາຊົນເຮັດຫຍັງໄດ້ແດ່ເມື່ອພວກເຂົາບໍ່ມີໂອກາດໄດ້ໃຊ້ຊັບສິນບັດ
   ໃນປ່າ ດົງນັ້ນ

## ອະນາຄົດຂອງຊາດ

ຄາວທີ່ເຮົາຍັງນ້ອຍ ບໍ່ຮູ້ຮ້ອນຍຸ້ງສາ
ເມື່ອຍາມເກີດມາ ພໍ່ແມ່ຟູມທະນອມລ້ຽງ
ບໍ່ໃຫ້ເຄືອງແຄນຂ້ອນ ອັນໃດຈັກຢ່າງ
ຈົນຍ່າງ ຈົນແລ່ນຫຼິ້ນ ຈະເລີນກ້າໃຫຍ່ ມາ
ພໍ່ແມ່ເຝິກຫັດໃຫ້ ຄວາມປາກຄວາມຈາ
ນຳພາໄປໂຮງຮຽນ ບ່ອນສອນຄວາມຮູ້
ຄູໄດ້ສິດສອນໃຫ້ ວິຊາການຫຼາຍຢ່າງ
ທັງຊ່າງຂຽນຊ່າງແຕ້ມ ສອນໃຫ້ສູ່ແນວ

ບົດຊຽນໃນທຸກດ້ານ ມີມານາເຫຼືອຫຼາຍ
ອັນຕະລາຍມານໂຈນ ໃຫ້ຊ່ວຍກັນຂັ້ນຂ້າ
ຕ້ອງພ້ອມພາກັນຕ້ານ ສັດຕູໃຫ້ພົບພ່າຍ
ເຂົ້າທຳລາຍຜ່າມ້າງ ດັບກ້ຽງພວກໝູ່ມານ
ພັກແລະລັດສັ່ງໃຫ້ ນ້ອຍໜຸ່ມຊາວລາວ
ທັງໜຸ່ມຍິງໜຸ່ມຊາຍ ຮ່ວມຮັກສາເມືອງບ້ານ
ຈຶ່ງຮີບພາກັນສ້າງ ເມືອງລາວໃຫ້ເຮືອງຮຸ່ງ
ອະນາຄົດສະຫວ່າງແຈ້ງ ເປັນຂອງເຈົ້າໜຸ່ມສະກັນ ແທ້ເນີ

## ແປສັບ

| คำศัพท์ | ความหมาย |
|---|---|
| ບໍ່ຮູ້ຍຽງສາ | ไม่รู้จักผิดจักถูก |
| ຖະໜອມ | รักษา อันเป็นที่รัก |
| ເຄືອງແຄນ | เคืองแค้น |
| ຈະເລີນກ້າ | เจริญแข็งแรง |
| ຄວາມປາກ | คำพูด |
| ສິດສອນ | สั่งสอน |
| ຊ່າງແຕ້ມ | ช่างเขียน ช่างวาด |
| ມານ ໂຈນ | มาร โจร พวกปล้น คนไม่ดี |
| ຂັ້ນຂ້າ | ฆ่าฟันดับสูญ |
| ພາກັນຕ້ານ | ช่วยกันต้านทาน |
| ຜ່າມ້າງ | ขวางทำลาย |
| ດັບກ້ຽງ | มดสิ้น |
| ນ້ອຍໜຸ່ມ | เยาว์วัย |
| ໜຸ່ມສະກັນ | เยาวชนผู้แข็งแรง |

## ຄຳຖາມ

1. ຕອນທີ່ເຮົາເປັນເດັກເປັນແນວໃດ
2. ພໍ່ແມ່ໄດ້ເບິ່ງແຍງລູກນ້ອຍຢ່າງໃດ
3. ພໍໃຫຍ່ຂື້ນມາແລ້ວພໍ່ແມ່ພາເຮັດຫຍັງ
4. ໃນບົດຮຽນນີ້ໄດ້ຮັບຄວາມຮູ້ດ້ານໃດແດ່
5. ພັກແລະລັດໄດ້ເຮັດຫຍັງແດ່

## ການທຳມາຫາກິນຂອງຊາວບ້ານເຮົາ

ຊາວບ້ານເຮົາ ເປັນຊາວສວນ ຊາວນາ ອາໃສຢູ່ກັບນ້ຳນາ ນ້ຳບອງປ່າ ແລະປ່າໄມ້ ເມື່ອເຖິງລະດູຝົນມາຮອດແລ້ວຊາວບ້ານເຮົາ ກໍທ້າງເອົາຄາດ ໄຖ ແລະ ງົວ ຄວາຍ ອອກໄປປະຈຳຢູ່ນາ ແລະນອນຢູ່ໃນຖຽງນ້ອຍ ພວກຜູ້ຊາຍພາກັນໄຖແລະຄາດ ທັງຕົກກ້າພ້ອມ ພວກແມ່ຍິງຢູ່ບ້ານກໍພາກັນຕຳເຂົ້າຫ້ຽງນາ ເມື່ອກ້າແກ່ພໍດຳແລ້ວ ເຂົາເຈົ້າຈຶ່ງຄ່ອຍອອກໄປຫຼົກກ້າ ແລະດຳນາ ການດຳນາສ່ວນຫຼາຍແມ່ນແມ່ຍິງ ສ່ວນຜູ້ຊາຍກໍຕ້ອງຊ່ວຍກັນເມື່ອປັດໄຖ ແລະຄາດແລ້ວ ເວລາດຳນາແລ້ວກໍ່ພາກັນກັບຕ່າວມາບ້ານເພື່ອກຳກັບວຽກເຮືອນແລະຮົ້ວສວນ ຈົນກວ່າຈະໄດ້ກ່ຽວເຂົ້າເມື່ອເອົາເຂົ້າຂື້ນເລົ້າແລ້ວກໍຍັງກຳກັບບົ່ມການເຮັດສວນອີກ ເມື່ອວຽກການສ່ວນໃຫຍ່ນີ້ ຫາກສິ້ນສຸດລົງແລ້ວ ຈຶ່ງພ້ອມກັນອອ່າຍໜ້າເຂົ້າຫາວຽກຢ່າງອື່ນ ຄືການຫາເງິນ-ຄຳ ການຕັດຟືນ ປ້ຳໄມ້ທ່ອນ ຫາຍິງສັດປ່າ ພວກທີ່ບໍ່ໄດ້ເຮັດໄຮ່ເຮັດນາກໍຫາກິນດ້ວຍການຊ່າງສີມືຄືເປັນຊ່າງໄມ້ ຊ່າງຕີເຫຼັກ ຫຼືເປັນພໍ່ຄ້າຊື້ຂອງມາຂາຍຢູ່ນຳບ້ານແຕ່ວ່າຄົນຈຳພວກນີ້ບໍ່ມີຫຼາຍໃນບ້ານເຮົາ ໂຮມຄວາມແລ້ວຊາວບ້ານເຮົາມີວຽກການເຮັດມົດທຸກຄົນ

## ແປສັບ

| คำศัพท์ | ความหมาย |
|---|---|
| ທ້າງ | เตรียมข้าวของ |
| ຖຽງນາ | เถียงนา กระต๊อบปลูกไว้ทุ่งนา |
| ເຂົ້າຫ້ຽງນາ | ข้าวสารเตรียมไปกินเวลาทำนา |
| ຕ່າວ | กลับคืน |

## ຄຳຖາມ

1. ເມື່ອເຫັນລະດູຝົນມາຮອດແລ້ວຊາວນາບ້ານເຈົ້າໄປໃສ
2. ເຂົາເຈົ້າເອົາຫຍັງໄປນາແລະໄປເຮັດຫຍັງຢູ່ນາ
3. ໃຜເປັນຜູ້ດຳນາແລະກ່ຽວເຂົ້າ
4. ພວກແມ່ຍິງຢູ່ບ້ານເຂົາເຈົ້າເຮັດຫຍັງ
5. ເມື່ອເຮັດສວນເຮັດນາແລ້ວ ວຽກຂອງຊາວບ້ານມີຫຍັງອີກແດ່

## ເຮືອນຂອງຂ້ອຍ

ເຮືອນຫຼັງເກົ່າທີ່ພໍ່ແລະແມ່ເຖົ້າຂ້ອຍ ໄດ້ພາກັນຢູ່ແຕ່ກ່ອນມານັ້ນ ເພພັງໄປແລ້ວ ດັ່ງນັ້ນ ພໍ່ແມ່ຂ້ອຍຈຶ່ງໄດ້ປຸກເຮືອນໃໝ່ທີ່ໄດ້ຢູ່ມາປະມານສອງປີແລ້ວ ເຮືອນຫຼັງນີ້ປຸກເປັນຫ້ອງສາມຫ້ອງ ພື້ນສູງມີລະບຽງອ້ອມສາມດ້ານ ມຸງດິນຂໍ ພື້ນແລະຝາເຮັດດ້ວຍແປ້ນລະບຽງກ້ຳຂວາ ເປັນບ່ອນອ້າຍແລະຂ້ອຍນອນ ລະບຽງກ້ຳຊ້າຍເປັນຫ້ອງນອນຂອງເອື້ອຍແລະນ້ອງຍິງຂ້ອຍ ສ່ວນລະບຽງທາງໜ້າເປັນບ່ອນຮັບແຂກ ແລະບ່ອນກິນເຂົ້າ ພໍ່ເຖົ້າແລະແມ່ເຖົ້າຂ້ອຍນອນຢູ່ສ່ວນທັດຫ້ອງເປີງ ພໍ່ແລະແມ່ຂ້ອຍນອນສ່ວນສຸດທ້າຍເຮືອນຂ້ອຍມີປະຕູສອງປ່ອງ ຢູ່ທາງເບື້ອງເປີງແລະເບື້ອງກອຍ ສ່ວນນອນແຕ່ລະຫ້ອງມີປ່ອງຢ້ຽມປ່ອງນຶ່ງຂັ້ນໃດມີສອງທາງອັນນຶ່ງກ່າຍຂຶ້ນລະບຽງໜ້າແລະອີກອັນນຶ່ງກ່າຍຂຶ້ນຊານທ່ອງ ຕິດກັບເຮືອນຄືສ່ວນຄອກສັດ ແລະຫລົກໄກ່ ພໍ່ຂ້ອຍເຮັດໃສ່ແປະຂ້າງ ເລົ້າເຂົ້າ ດ້ານນຶ່ງຂອງ ເລົ້າເຂົ້າເພິ່ນປຸກເທີບກອນຄົກມອງ ນ້ອງຍິງຂ້ອຍມັກປູກດອກໄມ້ໃສ່ເດີ່ນໜ້າບ້ານ ເຮືອນຂ້ອຍບໍ່ໃຫຍ່ແລະບໍ່ງາມປານໃດແຕ່ວ່າຂ້ອຍຫາກພໍໃຈຢູ່ກິນ ທ້ອນໂຮມກັບຄອບຄົວຂອງຂ້ອຍ

### ແປສັບ

| คำศัพท์ | ความหมาย |
|---|---|
| ກ້ຳຂວາ | เยื้องไปทางขวา |
| ເປີງ | ห้องโถง ในเรือนนอน |
| ເບື້ອງກອຍ | ด้านที่มีชานเชื่อมบ้านใหญ่กับครัวไฟ |
| ເທີບ | หลังคาที่ครอบไปยังสถานที่อื่น |

| | |
|---|---|
| ກ່າຍ | พาด |
| ຫລົກໄກ່ | เล้าไก่ |
| ເລົ້າເຂົ້າ | ยุ้งข้าว |
| ແປະ | ติด |
| ສ້ອມ | ห้องนอน |
| ປ່ອງຢ້ຽມ | หน้าต่าง |

## ຄຳຖາມ

1. ເປັນຫຍັງ ພໍ່ແລະແມ່ເຈົ້າຈຶ່ງປຸກເຮືອນໃໝ່ແທນເຮືອນພໍ່ເກົ້າ
2. ເຮືອນທີ່ປຸກຂຶ້ນໃໝ່ນີ້ມີຮູບຊົງຢ່າງໃດ
3. ເຮືອນແບ່ງເປັນຈັກຫ້ອງ ມີຫ້ອງໃດແດ່
4. ຄອກສັດເພິ່ນເຮັດໃສ່ບ່ອນໃດ
5. ດ້ວຍເຫດໃດເຈົ້າຈຶ່ງພໍໃຈຢູ່ກິນກັບຄອບຄົວຂອງເຈົ້າ

## ຄວາມພົວພັນກັບຊາວບ້ານອື່ນ

ຊາວບ້ານເຮົາ ທຳການຕິດຕໍ່ ກັບຊາວບ້ານອື່ນຢູ່ເລື້ອຍໆ ໃນລະດູແລ້ງເຮົາຫຍ່ອງໄປມາຫາກັນຕາມທະຫນົນຫົນທາງທີ່ລັດທົ່ງແລະລັດດົງ ໃນລະດູຝົນ ເມື່ອມີນ້ຳແກ່ງກັ້ນທາງກໍຕ້ອງຫຍ່ອງຫາກັນດ້ວຍເຮືອຖີບແພ ການທີ່ຊາວບ້ານເຮົາ ກັບຊາວບ້ານອື່ນໄດ້ຫຍ່ອງໄປມາຫາກັນນັ້ນມີຄວາມຈຳເປັນຫຼາຍຢ່າງ ສ່ວນຫຼາຍເຮົາຫຍ່ອງຫາກັນຍ້ອນການທຳມາຫາກິນ ເພາະບ້ານນັ້ນມີເຂົ້າປາອາຫານຫຼວງຫຼາຍ ບ້ານນີ້ກໍຫຍ່ອງໄປຊື້ຫຼືແລກປ່ຽນມາຢູ່ມາກິນແຕ່ລະບ້ານ ກໍມີຄວາມອຸດົມແລະຂາດແຄນຕ່າງກັນ

ຂໍ້ສຳຄັນອີກປະການນຶ່ງກໍຄື ຊາວບ້ານເຮົາແລະບ້ານໃກ້ຄຽງຫຼາຍຄອບຄົວ ເປັນສາຍຍາດຮ່ວມໄລຍິດກັນມາແຕ່ເຊັ່ນ ປູ່ ຍ່າ ຕາ ຍາຍ ທຸກມື້ນີ້ພວກເຮົາຍັງສືບຕໍ່ຄວາມສຳພັນທາງການສົມລົດປີລະຫຼາຍຄູ່ ການທີ່ມີຍາດພີ່ນ້ອງແຈກຢາຍຢູ່ຫຼາຍບ່ອນນັ້ນເມື່ອເກີດເຈັບປ່ວຍກໍຕ້ອງໄດ້ໄປເບິ່ງ

ແຍງ ແລະປິ່ນປົວກັນເມື່ອມີອຸບັດຕິເຫດສຳຄັນສິ່ງ ປູກຢ້ານແປງເຮືອນທີ່ທຳບຸນໃຫ້ທານ ກໍຕ້ອງໄດ້ຊິດ ຊ່ອຍກັນຢູ່ສະເໝີຄວາມພົວພັນລະຫວ່າງຊາວບ້ານເຮົາກັບຊາວບ້ານອື່ນ ພາໃຫ້ໄດ້ຮັບຄວາມສະດວກ ສະບາຍແລະມີຄວາມສາມັກຄີກັນຍິ່ງຂຶ້ນ

## ແປສັບ

| คำศัพท์ | ความหมาย |
|---|---|
| ພົວພັນ | เกี่ยวข้อง สัมพันธ์ |
| ອຸດົມ | มากมาย |
| ທ່ຽວ | เดินทาง |
| ນ້ຳນອງ | น้ำท่วม |
| ຍ້ອນ | ด้วยเหตุ |
| ແຕ່ເຊັ່ນ | ตั้งแต่รุ่น |
| ສືບຕໍ່ | สืบเชื้อสาย |
| ແຈກຢາຍ | กระจายกันอยู่ |
| ເບິ່ງແຍງ | ดูแล |
| ປິ່ນປົວ | รักษาคนไข้ |

## ຄຳຖາມ

1. ຊາວບ້ານເຈົ້າມີການພົວພັນກັບຊາວບ້ານອື່ນດ້ວຍວິທີໃດ
2. ຕອນທີ່ເຮົາເປັນເດັກເປັນແນວໃດເພິ່ນທຳການພົວພັນເພື່ອຈຸດປະສົງຫຍັງແດ່
3. ເຈົ້າມີຍາດພີ່ນ້ອງຢູ່ຕ່າງບ້ານໃກ້ຄຽງບໍ່
4. ເວລາໃດພີ່ນ້ອງຈຶ່ງມາຢາມເຈົ້າແລະພວກເຈົ້າຈຶ່ງໄປຢາມເພິ່ນ
5. ການພົວພັນກັບຊາວບ້ານອື່ນໄດ້ຮັບຜົນຢ່າງໃດ

## ທົ່ງນາຂອງບ້ານເຮົາ

ຊາວບ້ານເຮົາສ່ວນຫຼາຍເຮັດນາ ຢູ່ຕາມທົ່ງຕີນບ້ານລາງຄອບຄົວມີນາຢູ່ທົ່ງອື່ນເຊິ່ງຢູ່ຫ່າງໄກຈາກບ້ານເຮົາ ທົ່ງນາບ້ານເຮົາແຜ່ອອກໄປຕາມຊານໜອງ ຕໍ່ໃສ່ທົ່ງບ້ານໃກ້ຄຽງ ເມື່ອເຮົາຢູ່ໜ້າບ້ານຫຼຽວໄປທາງໃຕ້ ທາງເໜືອ ແລະທາງຕາເວັນອອກ ເຫັນ ທົ່ງກວ້າງໃຫຍ່ມີໝູ່ບ້ານຢາຍຢູ່ຫ່າງກັນ ທົ່ງນາຂອງບ້ານເຮົາລາບພຽງ ແລະເປັນດິນດີ ແຕ່ວ່າມັກມີນ້ຳຖ້ວມ ປີໃດຝົນຕົກຫຼາຍ ເຂົ້ານາໜອງ ບໍ່ສູ້ໄດ້ເກັບກ່ຽວເວັ້ນເສຍແຕ່ພວກທີ່ປູກເຂົ້າລອຍ ກໍ່ພົ້ນແລ້ງ ກໍເຕັມທີທາງນາໂຄກປີໃດຝົນຕົກສະໝ່ຳສະເໝີ ຊາວນາລຸ່ມ ແລະນາເທິງກໍພ້ອມກັນດີໃຈ ເພາະໄດ້ເກັບກ່ຽວ ຢ່າງເຕັມເມັດເຕັມໜ່ວຍ ເພື່ອປ້ອງກັນນ້ຳຖ້ວມ ທາງຊາວບ້ານເຮົາໄດ້ພ້ອມກັນຂຸດຮ່ອງປ່ານຄູ ແລະເຮັດປະຕູນ້ຳ ພວກເຈົ້າຂອງນາໂພນພາກັນເຮັດຝາຍທົດນ້ຳທ້ອຍ ແລ້ວຂຸດເໝືອງມາໃສ່ນາຝາຍແລະເໝືອງນີ້ຍັງເປັນປະໂຫຍດ ແກ່ພວກເຮັດນາແຊງໃນລະດູແລ້ງອີກນຳ ແຕ່ວ່າການເຮັດນາແຊງນີ້ສ່ວນຫຼາຍໄດ້ເຮັດຢູ່ຕາມໜອງແລະບຶງ

ເພື່ອຊິໃຫ້ນາມີນ້ຳແຊ່ຢູ່ສະເໝີກັນທົ່ວທຸກບ່ອນພວກຊາວນາ ພ້ອມກັນປ້ານຄັນນາແບ່ງເປັນຫຼາຍໄຂ່ເພື່ອຢາກໃຫ້ນາງາມ ຊາວນາກໍຫາຟຸ່ນຂີ້ງົວຂີ້ຄວາຍໄປຢາຍໃສ່ໄຮ່ນາໄວ້ແຕ່ເວລາຍາມແລ້ງ ດ້ວຍຄວາມເອົາໃຈໃສ່ຂອງຊາວນາທັງຫຼາຍທຸກຂອບປີ ເຂົ້າໃນທົ່ງນາພວກເຮົາ ຈຶ່ງງາມແລະໄດ້ຜົນດີ

### ແປສັບ

| ຄຳศัพท์ | ความหมาย |
|---|---|
| ທົ່ງຕີນບ້ານ | ทุ่งอยู่ใกล้บ้าน |
| ຊານໜອງ | ริมหนอง |
| ຢາຍ | กระจายอยู่ |
| ນາໂພນ | นาอยู่ที่สูง |
| ເຕັມເມັດເຕັມໜ່ວຍ | ได้อย่างพอใจ |
| ເໝືອງ | ร่องน้ำ |
| ຝາຍ | คันกูทดน้ำ |

## ຄໍາຖາມ

1. ທົ່ງນາບ້ານເຈົ້າຢູ່ໃສ
2. ເພື່ອປ້ອງກັນນໍ້າຖ້ວມຊາວນາເຮັດຢ່າງໃດ
3. ເປັນຫຍັງເພິ່ນຈຶ່ງປັ້ນຄັນນາເປັນຫຼາຍໄຮ່
4. ເພື່ອຢາກໃຫ້ເຂົ້າງາມເພິ່ນຕ້ອງເອົາຫຍັງແດ່ໃສ່ນາ
5. ການເຮັດນາແຊງສ່ວນຫຼາຍເຮັດຢູ່ບ່ອນໃດ

## ບຸນ ຕາມລະດູປີ

ຊາວບ້ານເຮົາ ເຄີຍໄດ້ຮ່ວມກັນທໍາບຸນຕາມລະດູປີຢູ່ໃນອັດເລື້ອຍໆມາ ລະຫວ່າງເດືອນຫ້າເຣີ່ມເຮັດບຸນປີໃຫມ່ເດືອນຫົກເພັງແມ່ນບຸນວິສາຂະບູຊາ ແລະບຸນບັ້ງໄຟເດືອນແປດເພັງແມ່ນບຸນເຂົ້າພັນສາ ເດືອນເກົ້າດັບ ແມ່ນບຸນຫໍ່ເຂົ້າປະດັບດິນ ເດືອນສິບເພັງແມ່ນບຸນຫໍ່ເຂົ້າສະຫລາກ ເດືອນສິບເອັດເພັງ ແມ່ນບຸນອອກພັນສາ ຕັ້ງແຕ່ເດືອນສິບເອັດເພັງ ເຖິງເດືອນສິບສອງເພັງເປັນໄລຍະຈໍາກັດ ເຊິ່ງເພິ່ນເຮັດບຸນກະຖິນ ນອກນັ້ນເດືອນສາມເພັງ ແມ່ນບຸນມາຄະບູຊາ ເຖິງເດືອນສາມ ເດືອນສີ່ເພິ່ນມັກເຮັດບຸນພະເວດ ບຸນທີ່ມີການຄົບງັນຫຼາຍຄືນແລະມີຄວາມມ່ວນຊື່ນ ກວ່າໝູ່ນັ້ນ ແມ່ນບຸນພະເວດ ຄວາມມ່ວນຊື່ນ ຮັນຄຶກຄື້ນທີ່ມີຂຶ້ນໃນປາງບຸນນີ້ ແມ່ນການແຫ່ກັນຫຼອນການລໍາຕອນ ບາງເມືອງຫຼືບາງທ້ອງຖິ່ນ ຍັງມີການສາຍຮູບເງົາ ລໍາເລື່ອງ ລໍາຄູ່ ມີນອຍ ແລະຈູດບັ້ງໄຟດອກໄມ້ເປັນຕົ້ນ

ການເຮັດບຸນພະເວດທຸກປາງ ຊາວບ້ານເຮົາໄດ້ເອົາດີກາໄປ ນິມົນພະສົງສາມະເນນ ແລະເຊີນເຖົ້າແກ່ບ່າວສາວມາກິນທານຟັງເທດແລະຄົບງັນແລ້ວ ນີ້ທໍາອິດເພິ່ນຍັງມີການບວດນາກແລະການຫົດນໍ້າພະສົງຕາມຮີດຄອງປະເພນີອີກ

ການເຮັດບຸນທຸກໆປາງໄດ້ເປັນໄປຕາມຄວາມປາດຖະໜາຂອງຊາວບ້ານ ແລະແຂກຄົນທີ່ມີສັດທາເຫຼື້ອມໃສດ້ວຍກັນ

# ແປສັບ

| คำศัพท์ | ความหมาย |
|---|---|
| ວັນວິສາຂະບູຊາ | วันเพ็ญเดือนหกเป็นวันประสูติ ตรัสรู้ ปรินิพพาน |
| ວັນມາຄະບູຊາ | วันเพ็ญเดือนสามเป็นวันประชุมสงฆ์และปลงสังขาร |
| ດີກາ | หนังสือเชิญชวน |
| ລຳຕອບ | การลำที่มีผู้ชายลำ ผู้หญิงลำตอบด้วยผญาหรือคำคม |

# ຄຳຖາມ

1. ທຸກປີເພິ່ນໄດ້ເຮັດບຸນຫຍັງແດ່
2. ບຸນພະເວດກາງເອີ້ນເພິ່ນເຮັດຫຍັງ
3. ສິ່ງໃດແດ່ພາໃຫ້ບຸນມ່ວນຊື່ນເວລາກາງຄືນ
4. ບຸນທຸກປາງລຸລ່ວງໄປດ້ວຍດີຍ້ອນຫຍັງ ແດ່
5. ເດືອນສິບເອັດເພັງ ເດືອນສາມເພັງ ເພິ່ນເຮັດບຸນຫຍັງແດ່

# ອາຊີບ

ຢູ່ໃນມະນຸດໂລກເຮົານີ້ ສີຮັ່ງຫຼືທຸກຈົນ ໝົດທຸກຄົນຕ້ອງທຳມາຫາກິນຕະຫລອດສິ້ນຊີວິດ ຕາມທີ່ເຮົາເຫັນຢູ່ໃນທຸກມື້ນີ້ການທຳມາຫາກິນຂອງມະນຸດທຸກຊົນຊາດ ທຸກເພດ ທຸກໄວ ມີຢູ່ຢ່າງຫຼວງຫຼາຍຈົນນັບບໍ່ຖ້ວນ ບາງພວກຫາກິນດ້ວຍສະຕິປັນຍາ ບາງພວກກໍ່ຫາກິນດ້ວຍເຫື່ອແຮງ ແລ້ວແຕ່ຄວາມຮູ້ທີ່ຊຳນານ ແລະຄວາມສາມາດຂອງແຕ່ລະບຸກຄົນ ວິທີທາງຕ່າງໆກ່ຽວກັບການທຳມາຫາກິນຂອງຄົນເຮົານີ້ເອີ້ນວ່າ ອາຊີບ

ອາຊີບຂອງຄົນເຮົານັ້ນອາດ ແບ່ງອອກເປັນສອງຝ່າຍຄືອາຊີບຊາວເມືອງ ແລະອາຊີບຊາວຊົນນະບົດ ຄືຢ່າງດັ່ງໃນປະເທດເຮົາກ່ອນພຸດທະສັກກະຫລາດ ຊາວເມືອງສ່ວນຫຼາຍເປັນຂ້າລັດຖະການ ຫຼື ຄົນງານຂອງລັດຖະບານ ເປັນພໍ່ຄ້າແມ່ຄ້າແລະນັກທຸລະກິດ ເຊັ່ນຄົນຮັບເໝົາກໍ່ສ້າງ ເຈົ້າຂອງໂຮງພິມ ແລະໂຄສະນາພ້ອມຄົນງານກຳມະກອນແລະວິສະວະກອນຂອງພະແນກຕ່າງໆ ດັ່ງນີ້ເປັນຕົ້ນ

ຊາວຊົນນະບົດສ່ວນຫຼາຍເປັນຊາວກະສິກອນ ຄົນຈຳພວກນີ້ຫາກິນດ້ວຍການປູກຝັງ ລ້ຽງສັດຢູ່ຕາມນາ ແລະເຮັດສວນເຮັດໄຮ່ຢູ່ຕາມແຄມບວກໜອງບຶງ ແລະຢູ່ຕາມພູຜາປ່າດົງ ນອກຈາກນີ້ຢູ່ຕາມໝູ່ບ້ານຕ່າງໆຍັງມີຄົນຫາກິນດ້ວຍສີມືຄື ຊ່າງຕີເຫຼັກ ຊ່າງໄມ້ ຊ່າງຕ່ຳແຜ່ນຜ້າ ຊ່າງສານ ຊ່າງປັ້ນດິນ ຊ່າງຕີເຄື່ອງເອ້ເງິນ ແລະຄຳ ແຕ່ວ່າຊ່າງພວກນີ້ມີຈຳນວນນ້ອຍ ເຊິ່ງສ່ວນຫຼາຍກໍ່ແມ່ນຊາວກະສິກອນນັ້ນເອງແລະຜົນງານທີ່ເຂົາເຈົ້າເຮັດໄດ້ ກໍພຽງແຕ່ແລກປ່ຽນຊື້ຂາຍກັນຢູ່ພາຍໃນບ້ານເມືອງເທົ່ານັ້ນ

ການທຳມາຫາລ້ຽງຊີວິດເປັນສິ່ງນຶ່ງທີ່ຈຳເປັນເຊິ່ງມວນມະນຸດເຮົາທັງຫຼາຍຫຼີກເວັ້ນບໍ່ໄດ້ແຕ່ວ່າທາງທີ່ດີເຮົາຄວນຫາກິນຕາມທາງທີ່ຊອບທຳຈຶ່ງຈະນັບວ່າເຮົາເປັນພົນລະເມືອງດີຂອງຊາດ ແລະຂອງເພື່ອນມະນຸດນຳກັນ

## ແປສັບ

| ຄຳສັພທ໌ | ความหมาย |
|---|---|
| ສິ້ນຊີວິດ | ตลอดชีวิต |
| ເຫື່ອແຮງ | เหงื่อแรงงาน |
| ເອີ້ນວ່າ | เรียกว่า |
| ບຸກຄົນ | คนแต่ละคน |
| ກະສິກຳ | การเพาะปลูกพืช |
| ແຄມ | ริม |
| ບວກ | หนองน้ำ |
| ສີມື | ฝีมือ |

## ຄຳຖາມ

1. ມະນຸດໂລກທຸກຊົນຊາດ ພວກເຂົາຫາກິນດ້ວຍທາງໃດແດ່
2. ອາຊີບຂອງຄົນແບ່ງອອກເປັນຈັກຝ່າຍ ມີຫຍັງແດ່
3. ການທຳມາຫາລ້ຽງຊີບມີຄວາມຈຳເປັນຢ່າງໃດ

# ການເຮັດນາແຊງ

ການເຮັດນາແຊງ ແມ່ນການເຮັດນາໃນລະດູແລ້ງ ເຊິ່ງຊາວກະສິກອນເຮົາຢູ່ຫຼາຍແຫ່ງບໍ່ທັນລຶ້ງເຄີຍ ແລະຊຳນານເທື່ອພວກເຮົາຕ້ອງນຳໃຊ້ວິທະຍາການຢ່າງຄັກແນ່ ຜົນຜະລິດຈຶ່ງຈະໄດ້ຫຼາຍ ວິທະຍາການບາງອັນທີ່ຕ້ອງປະຕິບັດມີດັ່ງນີ້

ຮັບປະກັນໃຫ້ມີນ້ຳພຽງພໍ ໄຖຄາດໃຫ້ເລິກແລະແຫຼກ ໃສ່ຝຸ່ນໃຫ້ຫຼາຍ ແລະປັກຕາມເວລາ ເລືອກແນວໃຫ້ເໝາະສົມ ແລະຄັດກ້າໃຫ້ທັນລະດູການ ການປັກດຳນາແຊງຕ້ອງໃຫ້ຖີ່ແລະໃສ່ກ້າຫຼາຍກວ່ານາປີ ແຕ່ບໍ່ຄວນດຳເລິກ ນອກຈາກນັ້ນຍັງຕ້ອງບົວລະບັດຮັກສາເປັນປະຈຳເຊັ່ນ ເສຍຫຍ້າ ປາບສັດຕູພືດແລະອື່ນໆ

ເມື່ອເຂົ້າພໍກ່ຽວແລ້ວກໍ່ຮີບເກັບກ່ຽວໃຫ້ທັນເວລາແລະລະດູການແລະມ້ຽນມັດໃຫ້ດີ ຖ້າປະຕິບັດຕາມຫຼັກການເຕັກນິກວິທະຍາສາດ ແລ້ວຜົນຜະລິດກໍ່ຈະເພີ່ມຂຶ້ນເລີ່ມການເຮັດນາປີ ປີໃດຂ້ອຍກໍ່ຍ່າງຜ່ານນາທາງພື້ນນຶ່ງຈຶ່ງໄປຮອດໂຮງຮຽນ ເວລາເຮັດນາ ຂ້ອຍເຫັນຄົນໄຖນາແລະດຳນາ ກັບເຫັນເດັກນ້ອຍລ້ຽງຄວາຍນຳ ເມື່ອນ້ຳໃນນາບໍ່ມີກໍ່ເຫັນເຂົາສະນ້ຳຮ່ອງນ້ຳໜອງເຂົ້າໃສ່ນາ ແລະ ຄົນນາຢູ່ຊາວນານັ້ນເຂົາຢູ່ນາທຸກເຊົ້າຄ່ຳເພື່ອບົວລະບັດແລະຮັກສາຕົ້ນເຂົ້າບໍ່ໃຫ້ມີອັນຕະລາຍ ເຂົາຢູ່ກັບນານັ້ນຈົນເຖິງລະດູຂົນເຂົ້າມາບ້ານ ການເຮັດນາແຊງຈຶ່ງສົມບູນຕາມທີ່ໄດ້ເລົ່າມາສູ່ຟັງນີ້ແລ້ວ

## ແປສັບ

| คำศัพท์ | ความหมาย |
|---|---|
| ວິທະຍາການ | คือหลักวิชาการ |
| ຜົນຜະລິດ | ผลที่ได้จากการออกแรงงานเพิ่มพูน |
| ພື້ນນຶ່ງ | เขตแดนนาตอนหนึ่ง |
| ຜ່ານ | เดินผ่านไป |
| ບົວລະບັດ | ดูแล ปฏิบัติ |

### ຄຳຖາມ

1. ເຂົາເຮັດນາແຊງໃນລະດູໃດ
2. ເຮັດແນວໃດຊາວນາຈຶ່ງຈະໄດ້ຜົນຜະລິດຫຼາຍ
3. ການບົວລະບັດຮັກສາຕົ້ນເຂົ້າເພິ່ນເຮັດແນວໃດ
4. ເປັນຫຍັງຊາວນາຈຶ່ງຢູ່ນາທຸກເຊົ້າຄ່ຳ
5. ເວລາເຈົ້າຍ່າງຜ່ານໄປນາເຈົ້າໄດ້ເຫັນຫຍັງແດ່

## ການຫາລາຍໄດ້ຂອງຄອບຄົວຂ້ອຍ

ທຸກຄົນໃນຄອບຄົວຂ້ອຍ ໄດ້ຊ່ວຍກັນເຮັດເຄື່ອງຂາຍເພື່ອຫາລາຍໄດ້ປະຈຳວັນ ພໍ່ເຖົ້າຂ້ອຍສານຕິບເຂົ້າ ເຮັດກະຊ້າກະຕ່າແບບຕ່າງໆເພິ່ນເຮັດຫຼາ ເຮັດອັກ ແລະຟືມ ໄວ້ຂາຍ ລາງເທື່ອເພິ່ນເລັ່ນປ່ານ ສານແຫ ສານມອງ ແລະກະດຸ້ງແມ່ເຖົ້າຂ້ອຍເກັບໃບເຕີຍ ແລະໃບຄຸ້ມ ເພື່ອທໍກະບອງ ແມ່ແລະເອື້ອຍເອົາໃຈໃສ່ໃນການຕໍ່າຫູກ ເພິ່ນຕໍ່າແພຝ້າຍແພໄໝແລະຜ້ານຸ່ງ ເພິ່ນເຮັດໃຫ້ຕາມຄວາມຕ້ອງການຂອງຜູ້ສັ່ງຊື້ ນອກນັ້ນ ເພິ່ນຍັງຕໍ່າສິ້ນໄໝ ສິ້ນຝ້າຍ ຜ້າສະໄບ້ງໄວ້ໃຊ້ໃນຄອບຄົວ

ໃນລະດູແລ້ງພໍ່ແລະອ້າຍໄດ້ພາກັນເຂົ້າປ່າຟັນຟືນຂາຍ ມີເຕີຂ່ານ ເດົາກົບຈີ່ລາງປີເພິ່ນຕັ້ງແຕ່ຕັດໄມ້ທ່ອນຂາຍໃຫ້ໂລງເລື່ອຍ ຫຼືບໍ່ດັ່ງນັ້ນ ເພິ່ນກໍ່ຟັນເສົາເຮືອນໄວ້ຂາຍໃຫ້ພວກເຮັດເຮືອນ

ແມ່ແລະເອື້ອຍຂອງຂ້ອຍ ຫຼວງໄປຕະຫລາດໃນເມືອງເກືອບທຸກມື້ ເພິ່ນໄປຂາຍຜັກ ໝາກເຜັດ ໝາກເຂືອ ໄຂ່ ປາ ຫຼືບາງເທື່ອກໍໄປຂາຍຜ້າສິ້ນ ຜ້າສະໄບ້ງ ເມື່ອໄດ້ເງິນມາແລ້ວ ເພິ່ນຊື້ຂອງທີ່ເຮົາບໍ່ມີ ແລະເຮັດບໍ່ໄດ້ຢູ່ໃນຄອບຄົວມາກິນແລະມາໃຊ້ ບາງເທື່ອພໍ່ຂ້ອຍໄດ້ພາຂ້ອຍໄປຂາຍຂອງໃນເມືອງ ທຸກເທື່ອທີ່ເພິ່ນໄປພໍ່ຄ້າ ຕ້ອງມີຂອງຂາຍເຕັມກວຽນ ເພິ່ນໄປຂາຍ ເຂົ້າສານ ປາແດກ ກະບອງ ໝູ ແລະເປັດໄກ່ ລາງເທື່ອກໍ່ແມ່ນໄປຂາຍເຄື່ອງປ່າ ເຊັ່ນ ກ້ອຍ ອ້ອຍ ໝາກອື ໝາກໂດ່ນ ມັນດ້າງ ມັນເພົ້າ ແລະເຄື່ອງອື່ນໆອີກ ຄອບຄົວຂ້ອຍບໍ່ມີຄວາມຂາດເຂີນ ໃນການຢູ່ກິນແລະນຸ່ງຫົ່ມ ດ້ວຍວ່າໝົດທຸກຄົນໄດ້ພ້ອມພຽງກັນເອົາໃຈໃສ່ ເຮັດວຽກເຮັດການດ້ວຍຄວາມດຸໝັ່ນ

## ແປສັບ

| คำศัพท์ | ความหมาย |
|---|---|
| ໝາກອຶ | ฟักทอง |
| ໝາກໂຕ່ນ | ลูกแฟง ลูกฟัก |
| ພໍ່ເຖົ້າ | คุณตา หรือพ่อตา |
| ສິ້ນໄໝ | ผ้าถุง ผ้าสิ้นไหม |
| ແມ່ເຖົ້າ | คุณยาย หรือแม่ยาย |
| ເຕົາດິນຈີ່ | เตาดินอิฐ |
| ກະບອງ | ไต้สำหรับจุดไฟ |
| ຄູ່ມື້ | ทุกวัน |
| ຕ່ຳຫູກ | ต่ำผ้า ทอผ้า |
| ໝາກເຜັດ | พริก |
| ປາແດກ | ปลาร้า |

## ຄຳຖາມ

1. ການຫາລາຍໄດ້ແຕ່ລະຄົນໃນຄອບຄົວເພິ່ນເຮັດຫຍັງແດ່
2. ພໍ່ແລະອ້າຍເຈົ້າຫາເງິນໄດ້ຢ່າງໃດ
3. ແມ່ແລະເອື້ອຍເຈົ້າໄປຂາຍຫຍັງທີ່ຕະຫລາດທຸກມື້
4. ພໍ່ເຈົ້າໄປຂາຍຫຍັງຢູ່ຕະຫລາດ
5. ໃນລະດູແລ້ງເປັນຫຍັງພໍ່ແລະອ້າຍຈຶ່ງພາກັນເຂົ້າປ່າ

## ໄປຢາມລຸງຢູ່ວຽງຈັນ

ທ້າວພິງກິດ ແລະ ນ້ອງສາວດີໃຈຫລາຍ ເມື່ອໄດ້ຍິນພໍ່ວ່າມື້ອື່ນຊິພາໄປຢາມລຸງຢູ່ວຽງຈັນ ສອງອ້າຍນ້ອງກຽມເຄື່ອງນຸ່ງໃສ່ກະເປົາ ສ່ວນແມ່ກຽມເຄື່ອງໃຊ້ ແລະ ຂອງກິນສຳລັບການເດີນທາງ ເຂົາເຈົ້າອອກເດີນທາງດ້ວຍລົດເມ ໃນເວລາລົດເມພວມແລ່ນຢູ່ນັ້ນພິງກິດຫລຽວອອກໄປຂ້າງນອກ

ເຫັນເຮືອນແລະຕົ້ນໄມ້ຢູ່ແຄມທາງແລ່ນຄືນຫຼັງຈຶ່ງບອກໃຫ້ພໍ່ເບິ່ງ ພໍ່ບອກວ່າບໍ່ແມ່ນເຮືອນແລະຕົ້ນໄມ້ແລ່ນ ຫາກເປັນເພາະເຮົາຢູ່ໃນລົດທີ່ພວມແລ່ນ ຈຶ່ງຄືວ່າເຮືອນແລະຕົ້ນໄມ້ແລ່ນຄືນຫຼັງ

ຕອນແລງລົດເມກໍໄປຮອດນະຄອນຫຼວງວຽງຈັນ ລົດແລ່ນຕາມທາງໃນເມືອງຜ່ານ ໂຮງຮຽນ ໂຮງໝໍ ສຳນັກງານອົງການ ໂຮງຈັກ ໂຮງງານ ແລະ ເຮືອນ ຢູ່ຢ່າງຫຼວງຫຼາຍ ພົງກິດສົນໃຈໄຟແດງ ໄຟເຫຼືອງ ແລະ ໄຟຂຽວ ຢູ່ຕາມທາງສີ່ແຍກ ພໍ່ບອກວ່າ ເມື່ອເຫັນໄຟເຫຼືອງຕ້ອງກຽມຢຸດລົດ ໄຟແດງຕ້ອງຢຸດລໍຖ້າ ໄຟຂຽວຈຶ່ງແລ່ນຜ່ານໄປໄດ້ ຖ້າວ່າບໍ່ມີໄຟສັນຍານແບບນີ້ ລົດອາດຈະຕຳກັນ ເມື່ອຮອດສະຖານີລົດເມ ກໍເຫັນປ້າແລະລຸງມາລໍຖ້າຮັບພວກເຮົາຢູ່ ທຸກຄົນດີໃຈທີ່ໄດ້ພົບກັນ ພົງກິດແລະນ້ອງສາວຍົກມືໄຫວ້ພ້ອມທັງກ່າວວ່າ ສະບາຍດີປ້າລຸງ ປ້າແລະລຸງກໍຕອບຄືນວ່າສະບາຍດີຫຼານເອີ້ຍ

## ແປສັບ

| คำศัพท์ | ความหมาย |
|---|---|
| ອອກເດີນທາງ | ไป เคลื่อนที่ |
| ສະຖານີ | ที่จอดรถประจำทาง |
| ນະຄອນຫຼວງ | เมืองใหญ่ |
| ສຳນັກງານອົງການ | ที่ทำงาน |
| ໂຮງຈັກໂຮງງານ | ที่ผลิตสิ่งของต่างๆ |

## ຄຳຖາມ

1. ກ່ອນຈະໄປຢາມລຸງ ພົງກິດແລະນ້ອງສາວກຽມຫຍັງແດ່
2. ເວລາລົດພວມແລ່ນ ພົງກິດເຫັນເຮືອນແລະຕົ້ນໄມ້ເປັນແນວໃດ
3. ຕາມທາງສີ່ແຍກ ເພິ່ນໃຊ້ໄຟສັນຍານສີຫຍັງແດ່
4. ໄຟສັນຍານແຕ່ລະສີຊີ້ບອກແນວໃດ
5. ເມື່ອເຖິງສະຖານີລົດເມນະຄອນວຽງຈັນແລ້ວພວກເຂົາເຫັນໃຜແດ່

# ລະດູກ່ຽວເຂົ້າ

ຮອງເຂົ້າເດືອນເຕັ້ນນາ ຍາມກ່ຽວເຂົ້າມາຮອດແລ້ວ ພໍ່ແມ່ເອື້ອຍນ້ອງຂອງຂ້ອຍຈຶ່ງພ້ອມກັນໄປກ່ຽວໃນນາ ເມື່ອເພິ່ນກ່ຽວນັ້ນມືຊ້າຍກຳໄຊນຕົ້ນເຂົ້າມາ ແລ້ວຈຶ່ງກ່ຽວດ້ວຍມືຂວາ ສຽງພະນານເຄິ່ງຕົ້ນເຂົ້າ ຄັນເຕັມກຳມືແລ້ວກໍປັ້ງໄວ້ທີ່ຕີນ ແລະພາກັນຕັ້ງໜ້າກ່ຽວຕໍ່ໄປອີກ ພວກຢູ່ນາໃກ້ຄຽງກັນກໍພາກັນກົ້ມໜ້າເອົາໃຈໃສ່ກ່ຽວຂອງເພິ່ນຄືກັນ ເມື່ອຕາກແດດແຫ້ງແລ້ວຈຶ່ງໄປກູ້ມັດເຂົ້າມາກອງໄວ້ໃນລານ ໜ້ອຍບໍ່ຊ້າ ຕາມທົ່ງນັ້ນກໍບໍ່ມີຕົ້ນເຂົ້າຈັກຕົ້ນ ຄົງເຫຼືອແຕ່ຕໍເຟືອງທີ່ນັ້ນ ເພາະເພິ່ນໄດ້ກ່ຽວ ແລະຂົນມາກອງໄວ້ລານໝົດແລ້ວ

ເວລາແລງ ພໍຕາເວັນລົງລັບປາຍໄມ້ ຂ້ອຍໄດ້ຍິນສຽງລະຄັງ ດັງມານແຕ່ອັດ ພວກພໍ່ນາຊາວສວນກໍເຂົ້າບ້ານລາງຄົນແບກຈົກຫຼືສຽມ ລາງຄົນຫາບເປັນລາງຄົນກໍຂີ່ຄວາຍທັງສຳພ້ອມ ຝູງງົວກໍເຂົ້າມາບ້ານຄືກັນເບິ່ງມັນຍ່າງລ້າໆ ຕາມທົ່ງນາທັງຮ້ອງຫາກັນສຽງນັນໄປໝົດ ໝູ່ນົກຈຽງແລະນົກສັ່ງກາທີ່ຮ້ອງຫາກັນເປັນແຊວໆ ແລ້ວພາກັນບິນເມືອຮັງໃຜມັນຕາມອິໄສຂອງນົກ ພວກຜູ້ບ່າວຜູ້ສາວທີ່ລົງອາບນໍ້າ ແລະຕັກນໍ້າ ກໍພາກັນເມືອເຮືອນ ຄັນຕາເວັນຕົກຄໍ່າມືດລົງ ເຮືອນໃຜກໍພາກັນໃຕ້ໄຟດ້ອຍກະບອງແລະກິນເຂົ້າແລງໝົດ

ພໍແລ້ວພາແລງ ອາກາດຮ້ອນຕອນກາງເວັນກໍຄ່ອຍເຫືອດຫາຍໄປຄວາມຊຸ່ມຊື່ນເປັນສະບາຍຂອງອາກາດຕອນກາງຄືນກໍຄ່ອຍຫຍັບເຂົ້າມາແທນທີ່ ພວກແມງໄມ້ ແມງມັນທັງຫຼາຍກໍພາກັນດີໃຈອອກມາຈາກຮູຮັງຮ້ອງສົ່ງສຽງນີ້ມັນຢູ່ນຳປ່າກ້ອຍແລະເຮືອນໃກ້ຄຽງ ສຽງແຄນ ສຽງປີ່ ແລະ ສຽງພິນ ຂອງຊາວໜຸ່ມທີ່ໄປກ່ຽວຫຼິ້ນດັ່ງກ່ອມກັນມາບໍ່ຮ່ອນບ້ານ ພາໃຫ້ຜູ້ເຖົ້າທີ່ນອນເປີຍເຢັນຢູ່ຕາມເຊຍອອນຊອນໃຈຍິ່ງໜັກໜາ

## ແປສັບ

| คำศัพท์ | ความหมาย |
|---|---|
| ຝູງງົວ | ฝูงวัว |
| ແຊວໆ | เสียงร้องหลายเสียงปนกัน |
| ອິໄສ | ลักษณะที่เป็นอยู่ |
| ອາກາດ | ความร้อนหนาวอยู่ตามที่ว่างทั่วไป |

## ຄຳຖາມ

1. ຍາມແລງພໍຕາເວັນລົງປາຍໄມ້ ເຈົ້າມັກໄດ້ຍິນສຽງຫຍັງ
2. ພວກນົກທັງຫຼາຍພາກັນໄປໃສ
3. ພໍແລ້ວພາແລງ ເຈົ້າຮູ້ສຶກວ່າອາກາດເປັນຢ່າງໃດ
4. ເມື່ອຮອດຍາມກ່ຽວເຂົ້າ ຮວງເຂົ້າເປັນແນວໃດ
5. ເມື່ອເພິ່ນກ່ຽວເຂົ້າແລ້ວ ເພິ່ນຂົນໄປໄວ້ໃສ

## ວັນແລະເວລາ

ຕັ້ງແຕ່ເຊົ້າພໍເປັນມື້ໃໝ່ ເຮົາເຫັນຕາເວັນຂຶ້ນສົ່ງແສງແຈ້ງສະຫວ່າງມາແຕ່ທາງທິດບູລະພາ ສວາຍມາທໍ່ໃດຕາເວັນຍິ່ງຂຶ້ນສູງຢູ່ໃນທ້ອງຟ້າ ເມື່ອຕາເວັນຂຶ້ນສູງສຸດ ແລະໄດ້ຈອນມາຢູ່ເທິງຫົວເຮົານັ້ນຄືເປັນເວລາທ່ຽງວັນ ໃນຕອນເຊົ້າແສງຕາເວັນ ເຢືອກເຢັນ ເວລາສວາຍງາຍແກ່ ແສງແດດຮ້ອນເຮົ້າຂຶ້ນຢ່າງວ່ອງໄວ ໃນລະດູຮ້ອນເວລາທ່ຽງແສງຕາເວັນສ່ອງລົງມາຢ່າງຊື່ກົງ ເຮັດໃຫ້ອາກາດຮ້ອນຫຼາຍ ເວລາບ່າຍຕາເວັນຄ່ອຍເຄື່ອນລອຍລົງຕ່ຳ ແສງຂອງມັນກໍຄ່ອຍອ່ອນມາລົງ ຄວາມເຮົ້າຮ້ອນກໍຜ່ອນກາຍລົງໄປ ເມື່ອຕາເວັນລັບຂອບຟ້າ ອາກາດກໍຄ່ອຍກັບກາຍຈາກຮ້ອນມາເປັນເຢັນ ຍາມນັ້ນເຮົາເອີ້ນວ່າຕາເວັນຕົກເມື່ອແສງຕາເວັນສູນຫາຍໄປແລ້ວ ຄວາມມືດກໍເຂົ້າມາແທນທີ່ກາງເວັນກໍກາຍເປັນກາງຄືນ

ຢູ່ໜ້າປັດນາລິກາມີເລກໝາຍໂມງແຕ່ 1 ເຖິງ 12 ເພື່ອຈະນັບໂມງ ເຮົານັບຕັ້ງແຕ່ໂມງ 1 ກາງຄືນ ວຽນໄປຫາ 12 ໂມງທ່ຽງວັນ ແລ້ວນັບແຕ່ໂມງ 1 ກາງເວັນວຽນໄປຫາ 12 ໂມງທ່ຽງຄືນ ຕັ້ງແຕ່ທ່ຽງຄືນໄປຫາທ່ຽງວັນນີ້ມີ 12 ຊົ່ວໂມງ ແລະຕັ້ງແຕ່ທ່ຽງວັນໄປຫາທ່ຽງຄືນກໍມີ 12 ຊົ່ວໂມງ ຄືກັນ ທັງສອງໄລຍະນີ້ໂຮມເຂົ້າກັນເປັນມື້ນຶ່ງມີ 24 ຊົ່ວໂມງຊີວິດຕັ້ງແຕ່ມື້ໃໝ່ໄດ້ຕັ້ງຕົ້ນແຕ່ເດິກທຸກມື້ ຊາວຊົນນະບົດອອກໄປສວນໄປນາ ພວກກຳມະກອນຄົນງານແລະພະນັກງານໄປຫາວຽກການຂອງໃຜຂອງລາວໃນມື້ທຳງານ ບໍ່ວ່າຢູ່ຕາມຊົນນະບົດຫຼືຢູ່ເມືອງ ທຸກຄົນຕັ້ງໃຈ ເຮັດວຽກການຢ່າງບໍ່ລົດລະ ເພື່ອໃຫ້ທັນກັບເວລາ ເມື່ອຕາເວັນລ່ວງລັບໄປແລ້ວ ວຽກການທັງປວງກໍຢຸດຕິລົງ ກາງຄືນເປັນເວລາພັກຜ່ອນແລະຫລັບນອນການໝູນວຽນຢ່ຽນໄປ ດັ່ງນັ້ນກໍນັບໄດ້ວ່າກາງເວັນເປັນເວລາເຮັດວຽກ

ກາງຄືນເປັນເວລາພັກຜ່ອນຂອງມວນມະນຸດ ເວລາກາງເວັນ ມະນຸດ ສັດເດຍລະສານ ແລະພືກສາຊາດທັງຫລາຍຍັງໄດ້ອາໄສແສງແດດແລະຄວາມຮ້ອນຂອງຕາເວັນຈຶ່ງຈະມີຊີວິດຢູ່ໄດ້ ວັນແລະເວລາເປັນຂອງມີຄ່າ ເຮົາບໍ່ຄວນປະປ່ອຍໃຫ້ເສຍໄປຢ່າງລ້າໆ ໂດຍບໍ່ໄດ້ເຮັດວຽກຫຍັງເລີຍ

## ແປສັບ

| ຄຳສັພທ໌ | ความหมาย |
|---|---|
| ທິດບູລະພາ | ทิศตะวันออก |
| ໂຄຈອນ | โคจรหมุนไป |
| ທ່ຽງວັນ | ครึ่งหนึ่งของวัน |
| ຜ່ອນກາຍ | อ่อนลง ผ่อนลง |
| ຕາເວັນລັບ | ตะวันตกดิน |
| ກຳມະກອນ | คนงาน กรรมกร |

## ຄຳຖາມ

1. ຕາເວັນຂຶ້ນທາງໃດ ແລະໂຄຈອນໄປຢ່າງໃດ
2. ວັນແລະເວລາໄດ້ແບ່ງເປັນຢ່າງໃດ
3. ເກີດເປັນມື້ມະນຸດເຮົາຕ້ອງເຮັດວຽກເພື່ອປະໂຫຍດອັນໃດ
4. ເປັນຫຍັງເພິ່ນຈຶ່ງວ່າວັນແລະເວລາເປັນຂອງມີຄ່າ

## ເລື່ອງຫຍໍ້ຂອງນິທານສຽວສະຫວາດ

ມີຕະກູນກະດຸມພີ ມີຜົວເມຍຄູ່ນຶ່ງຕັ້ງເຮືອນຊານຢູ່ໃນນະຄອນພາລານະສີກະດຸມພີຜົວເມຍຄູ່ນັ້ນ ມີລູກຊາຍຢູ່ສອງຄົນ ຜູ້ອ້າຍຊື່ທ້າວສີສະຫລຽວ ຜູ້ນ້ອງຊື່ທ້າວສຽວສະຫວາດ ເມື່ອທ້າວສຽວສະຫວາດໃຫຍ່ມາໄດ້ 16 ປີ ກະດຸມພີຜູ້ພໍ່ເຫັນວ່າ ຕົນເອົ້າແກ່ໃກ້ຈະເຖິງຄວາມຕາຍແລ້ວ ຈຶ່ງເອີ້ນລູກທັງສອງມາສັ່ງສອນ ຢູ່ມາ ເມື່ອພໍ່ແມ່ຕາຍແລ້ວ ສອງອ້າຍນ້ອງກໍໄດ້ແຫນເຮືອນສືບມາ ຕໍ່ມາມີພໍ່ຄ້າຊາວເມືອງຈຳປາ ເອົາເຮືອສະເພົາມາຈອດຢູ່ທ່າຂ້າມຂອງສອງພີ່ນ້ອງ ທ້າວສຽວສະຫວາດໄດ້ໄປ ລົງ

ເຄີຍກັບນາຍສະເພົາ ເມື່ອນາຍສະເພົາຈະກັບເມືອເມືອງ ທ້າວສຽວສະຫວາດກໍຂໍໄປນຳ ນາຍສະເພົາຖື ຄວາມຍິນດີຮັບເອົາໄປນຳແລະກໍເປັນລູກຮັກ ແລ້ວກໍເບີກສະເພົາກັບເມືອ ເວລາໄປຕາມທາງ ທ້າວ ສຽວສະຫວາດໄດ້ສົ້ຖາມນາຍສະເພົາຫຼາຍຢ່າງ ເມື່ອໄປເຖິງແກ້ງທ້າວຖາມວ່າ "ແກ້ງນີ້ມີຫີນບໍ່?" ຜ່ານໄປເຫັນດົງກໍຖາມວ່າ "ດົງນີ້ມີໄມ້ບໍ່ ?" ໄປເຫັນບ້ານຄົນທ້າວກໍຖາມວ່າ "ບ້ານນີ້ມີຄົນບໍ່?" ໄປເຫັນເມືອງກໍຖາມວ່າ "ເມືອງນີ້ມີເຈົ້າເມືອງບໍ່?"ໄປເຫັນວັດກໍຖາມວ່າ "ວັດນີ້ມີພະສົງອົງຄະເຈົ້າ ບໍ່ ?"ເມື່ອໄປພົບສິ່ງໃດທ້າວກໍສົ້ຖາມໄປເລື້ອຍໆ ຈົນນາຍສະເພົາເຫັນວ່າທ້າວສຽວສະຫວາດເປັນບ້າ ແລ້ວຫ້າມບໍ່ໃຫ້ຖາມອີກ

ຄັນໄປເຖິງເມືອງຂອງຕົນແລ້ວ ນາຍສະເພົາກໍເລົ່າເລື່ອງທີ່ທ້າວສຽວສະຫວາດຖາມນັ້ນໃຫ້ ລູກສາວຂອງຕົນຟັງ ລູກສາວເປັນຄົນສະຫລາດມີປັນຍາຈຶ່ງເວົ້າວ່າ ຄຳທີ່ທ້າວຖາມນັ້ນເປັນປັນຫາ ແລ້ວນາງກໍແກ້ປັນຫານັ້ນໃຫ້ພໍ່ຟັງ ຄື ຂໍ້ທີ່ທ້າວຖາມວ່າ ແກ້ງນີ້ມີຫີນບໍ່ນັ້ນ ແມ່ນທ້າວຖາມວ່າໃນ ແກ້ງນີ້ມີເພັດນິນຈິນດາບໍ່ ? ຂໍ້ທີ່ຖາມວ່າ ດົງນີ້ມີໄມ້ບໍ່ ? ແມ່ນທ້າວຖາມຫາໄມ້ຈວງໄມ້ຈັນທີ່ມີລາ ຄາແພງ ດັ່ງນີ້ເປັນຕົ້ນຄັນນາຍສະເພົາໄດ້ແຈ້ງໃນປັນຫານັ້ນແລ້ວ ຈຶ່ງເຂົ້າໃຈວ່າທ້າວສຽວສະຫວາດ ເປັນຄົນມີປັນຍາ ເລີຍຍົກລູກສາວຂອງຕົນໃຫ້ເປັນເມຍທ້າວສຽວສະຫວາດຕັ້ງແຕ່ນັ້ນມາ

ທ້າວສຽວສະຫວາດຢູ່ກັບພໍ່ເສດຖີ ຜູ້ເປັນນາຍສະເພົານັ້ນນານມາໄດ້ 3 ປີ ໃນຄາວນັ້ນພະ ຍາຈຳປານະຄອນ ຜູ້ເປັນເຈົ້າຜ່ານດິນປົກຄອງປະເທດບ້ານເມືອງບໍ່ຍຸດຕິທຳ ຈຶ່ງເກີດອາເພດມີເຫດ ຕ່າງຫລາຍປະການ ເທວະດາໝູ່ນຶ່ງມາປັ້ນດົນສັນດານຂອງພະຍາໃຫ້ມີຄວາມໂກດກ້າ ອີກໝູ່ນຶ່ງ ມາປັ້ນດິນໃຫ້ເປັນດັ່ງຄົນຂ້າເສິກຫຽວໄປມາລັບລີ້ ບາດວ່າເບິ່ງທີ່ແທ້ເລີຍບໍ່ເຫັນ ອາການເປັນດັ່ງນີ້ ພະຍາກໍມີຄວາມສະທ້ານຢ້ານກົວໄພຮັບຕະລາຍ ຈຶ່ງໃຫ້ເສນາອາມາດ ເກນຄົນທັງຫຼາຍມານອນ ຍາມຄືນລະຫ້າຮ້ອຍຄົນ ພວກທີ່ມານອນຍາມນັ້ນ ເທວະດາກໍປັ້ນຄົນໃຫ້ນອນຫຼັບຈົບແຈບ ເຖິງ ຍາມເດິກພະຍາຈຶ່ງສະເດັດອອກມາກວດເບິ່ງພວກນອນຍາມ ເຫັນນອນຫຼັບມິດທຸກຄົນກໍມີໃຈໂກດ ກ້າ ຈຶ່ງຂ້າຟັນພວກນອນຍາມນັ້ນຕາຍຫມົດອາການເປັນດັ່ງນີ້ຕໍ່ໆ ມາທຸກມື້ ເຖິງວັນນຶ່ງແມ່ນນາຍ ສະເພົາທີ່ຈະຕ້ອງຖືກບັງຄັບໃຫ້ໄປນອນຍາມເຝົ້າໂຮງພະຍາ ນາຍສະເພົາຮູ້ຢູ່ວ່າຕົນຈະຕ້ອງຕາຍຈຶ່ງ ສັ່ງລາເມຍແລະລູກເຂີຍດ້ວຍປະລິຍາຍຕ່າງໆ ທ້າວສຽວສະຫວາດໄດ້ຍິນດັ່ງນັ້ນ ຈຶ່ງຂັນອາສາໄປຕາງ ພໍ່ເຖົ້າ ດ້ວຍຄຳວ່າ "ຊີ້ນບໍ່ຂາດບໍ່ໃຫ້ດູງຊຽງ ການເມືອງມີຂ້າ ຂໍໄປຄ້ຳນ້ຳພຽງດໍຂໍຢັ້ງ ນ້ຳພຽງຝັ່ງ ຂໍລອຍ" ດັ່ງນີ້ແລ້ວກໍໄປນອນຍາມທີ່ໂຮງຂອງພະຍາ ເຖິງເວລາທ່ຽງຄືນພະຍາຈຳປານະຄອນກໍ

ສະເດັດອອກມາເບິ່ງຄົນນອນຍາມເຊິ່ງເວລານັ້ນຄົນທັງຫຼາຍນອນຫຼັບຫມົດແລ້ວຍັງແຕ່ທ້າວສຽວສະຫວາດຜູ້ດຽວ ເມື່ອທ້າວໄດ້ຍິນສຽງພະຍາໄຂພັກຕູອອກມາ ທ້າວກໍ່ຟ້ອອະຣິອະແຊມຂື້ນ ແລ້ວກໍກ່າວຄາຖາບົດນຶ່ງວ່າ "ຄະເຕສີ ຄະເຕສີ ກິງກະລະນັງ ອະທັງປີຕັງ ຊານາມີ" ດັ່ງນີ້ພະຍາໄດ້ຍິນກໍຕົກພະໄທ ຈຶ່ງສະເດັດກັບຄືນ ເຖິງຍາມກ້ອນສອງສະເດັດອອກມາເບິ່ງອີກ ທ້າວສຽວສະຫວາດກໍ່ອະຣິອະແຊມຂື້ນແລ້ວກ່າວວ່າ "ອັດສະຈັນໃຈໄອ້ ໄອຍ໌ສັງເວດ ສັງມາເປັນດັ່ງນີ້ ເປັນຫນ້າຢາກທ້ອນແທ້ນໍ?" ພະຍາໄດ້ຍິນດັ່ງນັ້ນກໍສະເດັດກັບຄືນ ເຖິງຍາມກ້ອນສາມ ສະເດັດອອກມາອີກທ້າວສຽວສະຫວາດ ອະແຊມຂື້ນແລ້ວກ່າວວ່າ "ເພິ່ງຈາບໍ່ເພິ່ງຈາໃຫ້ລັກຂະນາໃນໃຈ ແລ້ວຢ່າເພີນາ"

ພະຍາໄດ້ຍິນ ກໍສະເດັດກັບຄືນ ພໍດີເລີຍຮຸ່ງແຈ້ງພວກນອນຍາມພົ້ນຈາກຄວາມຕາຍຊູ່ຄົນ ແລ້ວກໍພາກັນເມືອເຮືອນຂອງໂຜລາວ ຝ່າຍພະຍາຄັນຮຸ່ງສວາງນາແລ້ວ ຈຶ່ງໃຫ້ອາມາດໄປຈັບເອົາພວກທີ່ມານອນຍາມໃນຄືນທີ່ແລ້ວມານັ້ນມາສືບຖາມວ່າ ແມ່ນໃຜມານອນຢູ່ຍາມບ່ອນທີ່ທາງລົງ ທ້າວສຽວສະຫວາດກໍ່ທູນຮັບວ່າແມ່ນຕົນເອງ ພະຍາຈຶ່ງຖາມຫາເຫດແຫ່ງຂໍ້ຄວາມທີ່ທ້າວເວົ້ານັ້ນວ່າເປັນປະການໃດ ທ້າວກໍ່ຈາລະໄນໃຫ້ພະຍາຟັງທຸກປະການດ້ວຍການຍົກນິທານຕ່າງໆ ມາປຽບທຽບ ພະຍາມີຄວາມເຫຼື້ອມໃສຍິນດີຢ່າງຫຼວງຫຼາຍ ຈຶ່ງຕັ້ງໃຫ້ທ້າວສຽວສະຫວາດເປັນບັນດິດປະຈຳພະອົງ ແຕ່ນັ້ນມາທ້າວກໍ່ສັ່ງສອນພະຍາ ແລະເສນາອາມາດທັງຫຼາຍໃຫ້ຕັ້ງຢູ່ໃນຮີດຄອງອັນດີ ມະຫານະຄອນຈຳປາລາດຊະທານີກໍມີຄວາມຈະເລີນສຸກສະຫວັດດີບໍ່ມີຂ້າເສິກສັດຕູມາບັງບຽດ ແລະທ້າຍສຸດທ້າວສຽວສະຫວາດກໍໄດ້ເລື່ອນຂື້ນເປັນອັກຄະມະຫາເສນາບໍດີຜູ້ໃຫຍ່ ໃນມະຫານະຄອນຈຳປານັ້ນຕະຫຼອດມາ

## ແປສັບ

| คำศัพท์ | ความหมาย |
|---|---|
| ເອີ້ນ | เรียก |
| ເຮືອສະເພົາ | เรือสำเภา |
| ລື້ງເຄີຍ | สร้างความคุ้นเคย |
| ໄປນຳ | ไปด้วย |
| ລູກສິດ | ลูกบุญธรรม |

| | |
|---|---|
| ເປີກສະເພົາ | ออกเรือสำเภา |
| ໄດ້ສີ້ | ได้ซักไซ้ , สอบถาม |
| ແກ້ງ | เกาะแก่ง |
| ດົງ | ป่าดง |
| ມີເຈົ້າ | มีเจ้านายผู้ปกครองเมือง |
| ຢູ່ກອນ | อยู่ร่วม |
| ບັນດົນ | ดลบันดาล |
| ສັນດານ | นิสัย , ความประพฤติ |
| ຢ້ານກົວ | กลัว |
| ເສນາອາມາດ | เสนาอำมาตย์ |
| ຫຼັບຈົບແຈບ | นอนหลับสนิท |
| ຍາມເດິກ | ยามดึก |

## ຄໍາຖາມ

1. ສືອເມຍຕະກູນກະດຸນພີມີລູກຈັກຄົນຊື່ວ່າແນວໃດແດ່
2. ທ້າວສຽວສະຫອາດໄດ້ສີ້ນາຍສະເພົາເວລາໄປຕາມທາງແນວໃດແດ່ ໃຫ້ເລົ່າສູ່ຟັງຕາມໃນເລື່ອງທີ່ອ່ານ
3. ລູກສາວນາຍສະເພົາໄດ້ອະທິບາຍເລື່ອງທີ່ທ້າວສຽວສະຫອາດສີ້ນາຍສະເພົາຢ່າງໃດ

## ເລື່ອງເລັ້ນຫນ້າຢ້ອຍ

ພາຍຫຼັງຄາບເຂົ້ານລາງຂອງມື້ນຶ່ງ ແມ່ຂອງຂ້ອຍກໍໄດ້ອອກໄປຕັ້ງວົງໝາກຕານແສງເດືອນຢູ່ເດີ່ນເຮືອນ ແລະລົມເລື່ອງຢອກຫຼີ້ນຢູ່ກັບພູ່ນ້ອຍ ສອງສາມຄົນ ດັ່ງທີ່ເພິ່ນເຄີຍເຮັດມາ ຈັກຄືດແນວໃດບໍ່ຂ້ອຍກໍ່ເລີຍໄກຍໄຍຍໄປຈໍາໃຫ້ເພິ່ນເລົ່ານິທານສູ່ຟັງ ອາດຈະແມ່ນຍ້ອນຂ້ອຍເປັນຜູ້ມັກຟັງນິທານຕ່າງໆທາກ ເພາະໃນໃຈເດັກຄາວນັ້ນພໍ່ຂ້ອຍຍັງມີຊີວິດຢູ່ ສອງສາມມື້ໃດ ເພິ່ນກໍ່ມັກຈະເລົ່າ

ນິທານສູ່ລູກໆຫຼານໆ ໄທບ້ານໄທເມືອງຟັງ ແລະນິທານທີ່ເພິ່ນໄດ້ເລົ່ານັ້ນແມ່ນມີຫຼາຍທີ່ສຸດ ແຕ່ມາເຖິງດຽວນີ້ ນີ້ນິທານໃດແດ່ຂ້ອຍກໍ່ຈື່ໄດ້ນິດແນ່ຂ້ອຍໄດ້ຕັ້ງຕົ້ນເລົ່າວ່າ

ແຕ່ກ່ອນນີ້ ຍັງມີສອງສ່ຽວເປັນຄົນບ້ານດຽວກັນ ໃນແຕ່ລະມື້ເຂົາທັງສອງ ເຄີຍໄປຊອກຢູ່ຫາກິນຮ່ວມທາງກັນເປັນຕົ້ນກໍແມ່ນການໄປຫາລ່າເນື້ອ ຍິງໜ້າ ຂ້າຮອກ ໄປແຕ່ລະເທື່ອໄພກໍໄດ້ພໍກຸ້ມກິນຄາບແລງຄາບງາຍ ແຕ່ຢູ່ຕໍ່ມາມື້ນຶ່ງສ່ຽວທັງສອງກໍໄດ້ພາກັນເຂົ້າໄປໃນປ່າ ເພື່ອຫາຍິງໜ້າຂ້າຮອກ ຕາມອາຊີບທີ່ເຄີຍປະຕິບັດມາ ຈົນວ່າຮອດຍາມຜີພາຍຂ້ອເອັ້ນເຂົາເຈົ້າຈຶ່ງໄດ້ພ້ອມກັນອ່າຍເຄົ້າເມືອເຮືອນປະກົດວ່າເທື່ອນີ້ໃນສອງສ່ຽວນັ້ນ ຜູ້ນຶ່ງພັດສະ ແຫນງ ເສົ້າອ້າຍ ຜູ້ທີ່ຫມານນັ້ນແມ່ນຮອກກໍໄດ້ ນົກກໍໄດ້ ແລະເລັ້ນໜ້າຢ້ອຍກໍໄດ້ສ່ອນສ່ຽວຜູ້ສະແຫນງນັ້ນ ພັດສະແຫນງອ້າຍຮອດບໍ່ໄດ້ແມ່ນແຕ່ໂຕຫຍັງເລີຍ ດັ່ງນັ້ນລາວຈຶ່ງຄິດອຸກໃຈວ່າເມື່ອເມືອຮອດເຮືອນ ເພາະໄທເຮືອນໄພງກໍ່ຄົງຈະກາງຕໍ່ກິນອາຫານແລງກັບລາວ ຈາກນັ້ນລາວກໍໄດ້ຕັດສິນໃຈ ຂໍນຳສ່ຽວຜູ້ທີ່ໄດ້ຫມານນັ້ນວ່າ

- ຂ່າເຮີຍ ! ໃຫ້ກັນຂໍສາດູໂຕຮອກຄຶກນັ້ນແນ່ !
- ບໍ່ ! ໃຫ້ບໍ່ໄດ້ແລ້ວຂາເຮີຍ ຮອກຄຶກມັນກິນອ່ອນ
- ຊັ້ນໃຫ້ກັນຂໍໂຕຮອກຫນ່ອນນັ້ນສາ ຂາ !
- ບໍ່ ! ຮອກຫນ່ອນມັນກິນຫວານ ຂາເຮີຍ
- ຊັ້ນໃຫ້ກັນຂໍໂຕນົກທອນຂວານນັ້ນສາແນ່ !
- ບໍ່ ! ນົກທອນຂວານຊິເອົາເມືອຕ້ອນນ້ອງເຮົາ
- ຊັ້ນໃຫ້ກັນຂໍໂຕເລັ້ນໜ້າຢ້ອຍນັ້ນເທາະ !
- ບໍ່ ! ເລັ້ນໜ້າຢ້ອນກັນຊິເອົາ ເມືອຕ້ອນເດັກນ້ອຍລູກຫຼານ

ເມື່ອເຫັນວ່າ ຂໍໂຕຫຍັງນຳສ່ຽວກໍ່ບໍ່ໄດ້ແລ້ວ ສ່ຽວຜູ້ທີ່ສະແຫນງ ກໍ່ເລີຍໄດ້ແຕ່ຍ່າງນຳຫຼັງສ່ຽວຜູ້ທີ່ຫມານນັ້ນເມືອ ດ້ວຍຄວາມເສຍຫວັງ ແລະຫງ່ອນເຫງົາ ບົນເສັ້ນທາງກັບເມືອບ້ານ ພໍໄປຮອດຫນອງໃຫຍ່ແຫ່ງໜຶ່ງ ບັງເອີນມີງູໃຫຍ່ໂຕຫນຶ່ງມາສວາບເອົາຕີນທັງສອງເບື້ອງຂອງສ່ຽວຜູ້ໄປກ່ອນ ເມື່ອງູໃຫຍ່ກືນຮອດຫນາກບ້າຕີນທັງສອງເບື້ອງ ແລ້ວກໍໄດ້ເອີ້ນໃສ່ສ່ຽວຜູ້ທີ່ມານຳຫຼັງວ່າ

- ຊ່ອຍກັນແດ່ ຊາເຣີຍ ງູກິນກັນແລ້ວ !
- ບໍ່ ! ກັນຊ່ອຍບໍ່ໄດ້ ຊາເຣີຍ ໃຫ້ຮອກຄືກກິນອ່ອນຂອງໄຕນັ້ນລະບໍ່ຊ່ອຍ
ຈາກນັ້ນງູກິນລົງອີກຮອດຫົວເຂົ່າ ລາວກໍ່ຮ້ອງຫາສ່ຽວຜູ້ນໍາຫຼັງອີກວ່າ
- ຊ່ອຍກັນແດ່ ຊາເຣີຍ !
- ບໍ່ ! ກັນຊ່ອຍບໍ່ໄດ້ ໃຫ້ຮອກຫນ່ອນກິນຫອພຂອງຮານັ້ນລະບໍ່ ຊ່ອຍແລະຕໍ່ມາງູກໍກິນ
ລົງອີກຮອດແອວ ແລ້ວກໍ່ຮ້ອງຫາສ່ຽວຕື່ມວ່າ
- ຊ່ອຍແດ່ ຊາເຣີຍ !
- ຊ່ອຍບໍ່ໄດ້ ຊາເຣີຍ! ໃຫ້ນົກທອນຂວານທີ່ໂຕຊິເອົາເນື່ອຕ້ອນນ້ອງນັ້ນລະບໍ່ຊ່ອຍ ແລະ
ສຸດທ້າຍງູໃຫຍ່ກໍ່ກິນລົງຮອດຄໍລາວກໍຍັງຮ້ອງຂໍຄວາມຊ່ອຍເຫຼືອຈາກຫມູ່ສ່ອນທາງວ່າ
- ຊາເຣີຍ ຊ່ອຍເອີຂັບແດ່
-ຊ່ອຍບໍ່ໄດ້ແລ້ວ ຊາເຣີຍ! ໃຫ້ເລັ່ນຫນ້າຢ້ອຍທີ່ຊິເອົາເນື່ອຕ້ອນເດັກນ້ອຍລູກຫຼານນັ້ນລະບໍ່ຊ່ອຍ
ໃນທີ່ສຸດ ງູກໍກິນລົງເນື່ອທ້ອງຈ້ອຍ ທັງຄົນທັງຕູ້ມທີ່ມີຮອກນີ້ນົກແລະມີເລັ່ນຫນ້າຢ້ອຍ ລົງ
ໄປຢູ່ໃນທ້ອງງູມືດທັງໄຕເລີຍຕາຍຈ້ອຍ ການທີ່ມີສ່ຽວທີ່ເຫັນແກ່ໂຕ ເມື່ອມີໄພກໍ່ຊິບໍ່ມີໃຜຊ່ອຍ

### ແປສັບ

| คำศัพท์ | ความหมาย |
|---|---|
| ເລັ່ນ | สัตว์ตระกูลเดียวกับกระรอก |
| ຄ້ຽວຫມາກ | กินหมากกินพลู , เคี้ยวหมาก |
| ເກີຍເຮືອນ | ระเบียงบ้าน |
| ຈັກຄຶດແນວໃດບໍ | ไม่รู้คิดอย่างไรนะ |
| ໄກຍໄຍ | โผล่มา ย้ายที่มา |
| ຈໍາໃຫ້ເພິ່ນ | บังคับให้ท่าน |
| ຍ້ອນ | เพราะว่า |
| ເພິ່ນກໍມັກ | ท่านก็ชอบ |
| ສ່ຽວ | เพื่อนสนิท |

| | |
|---|---|
| ຄາບແລງ | อาหารมื้อเย็น |
| ຄາບງາຍ | อาหารมื้อเช้า |
| ເມືອຕ້ອນ | กลับไปฝาก |
| ຍ່າງນຳຫຼັງ | เดินตามหลัง |
| ສອງ ເບື້ອງ | สองข้าง |
| ສວາບ | งาบ , กัด, ฮุบ |
| ຫມາກບ້າ | ตาตุ่มข้อเท้า สะบ้า |
| ຮອດແອວ | ถึงเอว |
| ຮາ | เรา หรือ ฉัน |

## ຄຳຖາມ

1. ສ່ຽວສອງຄົນຢູ່ບ່ອນໃດ ແລະມີອາຊີບເຮັດຫຍັງ
2. ສ່ຽວຜູ້ຫມານັ້ນໄດ້ຫຍັງແດ່
3. ນັກສຶກສານັກສ່ຽວຜູ້ຫມານ ຫຼືຜູ້ສະແຫນງຍ້ອນອ່າຫຍັງ
4. ງູໃຫຍ່ໄດ້ສວາບຜູ້ໃດ

## ເລື່ອງໝາບັກຫຼຽນ

| | |
|---|---|
| ຂ້ອຍຊິເວົ້າ | ເລື່ອງໝາຂອງຂ້ອຍ |
| ບັກຫຼຽນເຄີກ | ເປັນຊື່ຂອງມັນ |
| ຮູບພັນ | ສູງກົນອອດຫຼອດ |
| ຫາງບໍ່ຂອດ | ກົ່ງຂຶ້ນພໍດີ |
| ສີມັນແດງ | ມີນທັງໄຕທໍ່ອທ້ອງ |
| ຫູມັນຊ້ອງ | ໄປຫນ້າຊອນລອນ |
| ສີບມັນຫມອງ | ດຳປາບຈັກຫນ່ອຍ |
| ກ້ຽງລ້ອຍຊ້ອຍ | ອ່ອນແຈບຂົນມັນ |

ໝາສຳຄັນ          ເປັນຫນ້າຮັກໄດ່
ຂ້ອຍລ້ຽງໄວ້          ເອົາເຂົ້າໃຫ້ກິນ
ສຸດາະຫອີນ          ໝາດີຫາຍາກ
ຄົນອື່ນຢາກ          ເຮືອນຊານ
ມັນທະຍານ          ຫອນດັງໂດດໃສ່
ເຂົ້າໄປໃກ້          ທຳທ່າຊິກັດ
ຄັນເຫັນສັດ          ຫຼືຄົນໃນບ້ານ
ມັນບໍ່ຕ້ານ          ຫອນເທົ່ານອໃດ
ນອນຕາໃສ          ເບິ່ງຢູ່ເປົາໆ
ຍາມກິນເຂົ້າ          ມັນບໍ່ໄປກອນ
ເຮັດກະບອນ          ຄືຄົນຜູ້ຮູ້
ນອນນູບຄູ້          ຫລຽວເບິ່ງຄູດາຍ
ຄັນເຮົາກາຍ          ເອົາເຂົ້າຊິ້ນໃຫ້
ມັນຈຶ່ງໄດ້          ຄາບອອກໄປກິນ
ຕີນແລະຫູ          ຫາງເຫມັ່ງຫຼີກຫຼັກ
ຄືດັ່ງມັນ          ຮູ້ຈັກຂອບໃຈ
ຕໍ່ໄປນີ້          ເວົ້າເລື່ອງຄຸນໝາ
ຕາມຕຳລາລ້ຽງດູ          ບອກໄວ້
ຜິໃຫ້ໄດ້          ເປັນຂໍ້ອິຈານ
ໃຫ້ລູກຫຼານ          ຈື່ຈຳໄປຫນ້າ
ໝາຜູ້ຂ້າ          ບັກຫຽນມັນດີ
ມັນຫາກມີ          ບຸນຄຸນຕ່າງໆ
ຢ່າງທີ່ນຶ່ງ          ມັນຮັກເຈົ້າຂອງ
ບໍ່ຈອງຫອງ          ເທົ່າຫອນຜູ້ເຈົ້າ
ຢ່າງສອງເວົ້າ          ມັນຮັກສາເຮືອນ

| | |
|---|---|
| ມັນຕົວເກືອນ | ຍາມໃຈນເຂົ້າບ້ານ |
| ບໍ່ຊື່ດ້ານປານ | ທະຫານຍາມ |
| ຢ້າງທີສານ | ຍາມພະກຸນຍາດ |
| ມັນສະຫຼາດ | ທອນໃສ່ອີ່ງໆ |
| ຄືຊິ່ງຄົນໃຈບຸນ | ປ່າວຮ້ອງ |
| ໃຫ້ພີ່ນ້ອງ | ເຮືອນໃກ້ແລະໄກ |
| ໄດ້ຕັ້ງໃຈ | ກິນທານຜາຍແຜ່ |
| ຂ້ອຍໄດ້ແທ້ | ບຸນນັ້ນຄອບມັນ |
| ສິ່ງສຳຄັນ | ຍາມໄປທຸ່ງປ່າ |
| ມັນທຳທ່າ | ຄືເປັນໝາຍພານ |
| ເຫັນທາງຟານ | ໄລ່ເອົາກໍໄດ້ |
| ເທງັນແລະໄກ່ | ແລນແລະເຕົ່າ ເຕັນທານ |
| ບັກຫງູນງານ | ຈົບຕີຈັ່ງຊີ້ |
| ຕັ້ງແຕ່ນີ້ | ຟັງຂໍ້ຮັກສາ |
| ຂ້ອຍລ້ຽງໝາຢ່າງດີ | ລຽບຮ້ອຍ |
| ຄືວ່າຂ້ອຍ | ບໍ່ຂ້າຕີມັນ |
| ອາຫານປັນໃຫ້ | ກິນຈົນເອີ່ມ |
| ອາບນ້ຳໃຫ້ | ມັນກັງຢູ່ສະເຫມີມາ ຯ |